ສງງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

23-29 ມິຖຸນາ 2023

ປີທີ 12

ສະບັບທີ 928

ລາຍສັບປະດາ

# ກອງປະຊຸມສະໄໝສາມັນເທື່ອທີ 5 ສະພາແຫ່ງຊາດ ຊຸດທີ IX ໄຂຂຶ້ນຢ່າງເປັນທາງການ






(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການ ໃນຕອນເຊົ້າວັນຈັນທີ 26 ມິຖຸນາ 2023 ທີ່ຫ້ອງປະຊຸມຂອງສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານກອງປະຊຸມຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແລະ ບັນດາທ່ານຮອງປະທານສະພາແຫ່ງຊາດ, ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ມີທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປ ລາວ; ທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ; ມີບັນດາທ່ານການນຳຂັ້ນສູງ, ອາດີດການນຳຂັ້ນສູງຂອງພັກ-ລັດ, ບັນດາທ່ານສະມາຊິກລັດຖະບານ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ຜູ້ຊົງຄຸນວຸດທິ, ສະຖາບັນການສຶກສາ, ຫົວໜ່ວຍທຸລະກິດ, ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ແຂກຖືກເຊີນເຂົ້າຮ່ວມ.

ໂດຍປະຕິບັດຕາມລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຈະໄດ້ພິຈາລະນາບັນດາເນື້ອໃນທີ່ສຳຄັນ ດັ່ງນີ້:

1. ບົດລາຍງານ ໂດຍສັງເຂບ ຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບການເຄື່ອນໄຫວວຽກງານພົ້ນເດັ່ນຂອງລັດຖະບານ 6 ເດືອນຕົ້ນປີ ແລະ ສະເໜີທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023;

2. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍ

ອ່ານຕໍ່ໜ້າ 2

## ປະທານສະພາແຫ່ງຊາດ ກ່າວສູນທອນພິດໄຂກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX

ມື້ນີ້, ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການ ໃນທ່າມກາງບັນຍາກາດທີ່ທົ່ວພັກ-ລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດພວມສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມຄົບຄະນະ ຄັ້ງທີ 6 ຂອງຄະນະບໍລິຫານສູນກາງພັກ ສະໄໝທີ XI ກໍຄືແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX, ການດຳເນີນກອງປະຊຸມຄົບຄະນະກາງສະໄໝຂອງບັນດາອົງຄະນະພັກກະຊວງ, ອົງການທຽບເທົ່າ ແລະ ທ້ອງຖິ່ນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນຂະບວນແຂງແຮງ ແລະ ມີຜົນສຳເລັດຢ່າງຈົບງາມ.

ໃນໂອກາດທີ່ມີຄວາມໝາຍສຳຄັນນີ້, ກອງປະຊຸມມີຄວາມພາກພູມໃຈ ແລະ ຄວາມປິຕິຍິນດີເປັນຢ່າງຍິ່ງ ທີ່ໄດ້ຕ້ອນຮັບທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດແຫ່ງ ສປປ ລາວ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມທີ່ມີຄວາມສຳຄັນຄັ້ງນີ້, ຂໍສະແດງຄວາມຂໍ່ານັບຊົມເຊີຍ ຢ່າງສຸດອົກສຸດໃຈ.

ຂໍສະແດງຄວາມຂໍ່ານັບຊົມເຊີຍ ແລະ ຍິນດີຕ້ອນຮັບບັນດາທ່ານຜູ້ນຳຂັ້ນສູງຂອງພັກ-ລັດ, ບັນດາທ່ານອະດີດຜູ້ນຳຂັ້ນສູງຂອງພັກ-ລັດ, ບັນດາທ່ານສະມາຊິກລັດຖະບານ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ຜູ້ຊົງຄຸນວຸດທິ, ສະຖາບັນການສຶກສາ, ຫົວໜ່ວຍທຸລະກິດ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມຄັ້ງນີ້ ຢ່າງສຸດໃຈ.

ຂໍສະແດງຄວາມຊົມເຊີຍມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ຊຸດທີ IX ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າໃນຂອບເຂດທົ່ວປະເທດ ທີ່ໄດ້ເຂົ້າຮ່ວມກອງປະຊຸມຄັ້ງນີ້ ຢ່າງພ້ອມພຽງ.

ການເຄື່ອນໄຫວຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ ໃນໄລຍະຕົ້ນປີ 2023

ອ່ານຕໍ່ໜ້າ 2

## ນາຍົກລັດຖະມົນຕີ ລາຍງານການເຄື່ອນໄຫວວຽກງານພົ້ນເດັ່ນຂອງລັດຖະບານ



(ສພຊ) ໃນຕອນເຊົ້າຂອງວັນທີ 26 ພຶດສະພາ 2023 ທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ກ່ຽວກັບການເຄື່ອນໄຫວວຽກງານພົ້ນເດັ່ນຂອງລັດຖະບານ ໃນ 6 ເດືອນຕົ້ນປີ 2023 ດັ່ງນີ້:

1. ການຂະຫຍາຍຕົວດ້ານເສດຖະກິດ: ໄດ້ຊຸກຍູ້ໃຫ້ບັນດາຫົວໜ່ວຍການຜະລິດກະສິກຳ, ອຸດສາຫະກຳ ແລະ ບໍລິຫານທີ່ເປັນທ່າແຮງຂັບເຄື່ອນການຂະຫຍາຍຕົວຂອງເສດຖະກິດໃຫ້ດີຂຶ້ນ ອີງໃສ່ການຄິດໄລ່ GDP ຄາດຄະເນ 6 ເດືອນ (ໃສ່ຄາດຄະເນເນື່ອງຈາກການຄິດໄລ່ GDP ແມ່ນໄລ່ເປັນໄຕມາດ) ເຫັນວ່າເສດຖະກິດແຫ່ງຊາດຈະຂະຫຍາຍຕົວຢູ່ໃນລະດັບບໍ່ຫຼຸດ 4,8% (ໃນນີ້: ໄຕມາດ 1 ຂະຫຍາຍຕົວ 4,8% ແລະ ໄຕມາດ 2 ຄາດວ່າຈະຂະຫຍາຍຕົວ 4,9% ຄິດເປັນມູນຄ່າຕາມລາຄາໃນປີ ເທົ່າກັບ 118.467 ຕື້ກີບ ເທົ່າກັບ 51% ຂອງແຜນການປີ (ຕາມມະຕິສະພາແຫ່ງຊາດໝົດປີໃຫ້ບັນລຸ 4,5% ເທົ່າກັບ 234.160 ຕື້ກີບ).

2. ການເກັບລາຍຮັບງົບປະມານ ໄດ້ເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼຂອງລາຍຮັບງົບປະມານແຫ່ງລັດ, ດ້ວຍການສຸມໃສ່

ອ່ານຕໍ່ໜ້າ 4

## ຕາງໜ້າຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນໃສ່ບົດລາຍງານຂອງລັດຖະບານ



(ສພຊ) ໃນວັນທີ 26 ມິຖຸນາ 2023 ທ່ານ ສົມມາດ ພົລເສນາ ຮອງປະທານຄະນະປະຈຳສະພາແຫ່ງຊາດ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023, ທິດທາງແຜນການລົງທຶນຂອງລັດ ປະຈຳປີ 2024 ດັ່ງນີ້:

I. ຕໍ່ກັບພາກສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ 2023.

ຜ່ານການຮັບຟັງການລາຍງານຂອງລັດຖະບານ, ຄະນະປະຈຳສະພາແຫ່ງຊາດ ເຫັນໄດ້ເຖິງຄວາມພະຍາຍາມໃນການຈັດຕັ້ງປະຕິບັດມະຕິ ກອງປະຊຸມສະພາແຫ່ງຊາດ ໃນສະພາບເສດຖະກິດຂອງພາກພື້ນ ແລະ ສາກົນ ທີ່ຍັງສືບຕໍ່ມີຄວາມຜັນແປຢ່າງສັບສົນ ໂດຍສະເພາະແມ່ນບັນຫາເງິນເຟີ້,

ອ່ານຕໍ່ໜ້າ 3

## ກະຊວງການເງິນ ສາມາດປະຕິບັດລາຍຮັບໄດ້ 15.155 ຕື້ກີບ



(ສພຊ) ໃນວັນທີ 26 ມິຖຸນາ 2023 ທ່ານ ສັນຕິພາບ ພົມວິຫານ ລັດຖະມົນຕີກະຊວງການເງິນ ໄດ້ລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນ ແລະ ທິດທາງແຜນວຽກຈຸດສຸມ 6 ທ້າຍປີ 2023 ດັ່ງນີ້:

ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ: ອີງຕາມມະຕິສະພາແຫ່ງຊາດ ສະບັບເລກທີ 63/ສພຊ, ລົງວັນທີ 9 ທັນວາ 2022 ວ່າດ້ວຍການຮັບຮອງແຜນງົບປະມານແຫ່ງລັດ ປີ 2023, ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 90/

ອ່ານຕໍ່ໜ້າ 4

**ຊົມເຊີຍ ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງສຸດໃຈ!**

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ປີ 2023; ທິດທາງການລົງທຶນຂອງລັດ ປະຈຳປີ 2024;

3. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023

4. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023;

5. ບົດລານງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ;

6. ບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຢາເສບຕິດ;

7. ບົດລາຍງານຂອງລັດຖະບານ ກ່ຽວກັບຮ່າງຍຸດທະສາດແຜນພັດທະນາແຮ່ທາດ 10 ປີ (2021-1023) ແລະ ວິໄສທັດຮອດປີ 2035;

8. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມ;

9. ບົດລາຍງານຂອງລັດຖະບານ ກ່ຽວກັບຍຸດທະສາດຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030;

10. ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ຂົງເຂດຍຸຕິທຳ 4 ສະບັບ ໃນນີ້, ມີຂົງເຂດສານປະຊາຊົນສູງສຸດ 2 ສະບັບຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ຂົງເຂດຂອງອົງການໄອຍະການປະຊາຊົນສູງສຸດ 2 ສະບັບ ຄື: ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;

11. ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 10 ສະບັບ ໃນນີ້ ມີ ກົດໝາຍສ້າງໃໝ່ 4 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍວຽກງານສາທາລະນະສຸກ; ຮ່າງກົດໝາຍວ່າດ້ວຍການຈັດຫາງານ; ຮ່າງກົດໝາຍວ່າດ້ວຍອາກອນທີ່ດິນ; ຮ່າງກົດໝາຍວ່າດ້ວຍເຢົາວະຊົນລາວ ແລະ ກົດໝາຍປັບປຸງ 6 ສະບັບ ຄື: ກົດໝາຍວ່າດ້ວຍທະນາຍຄວາມທຸລະກິດ; ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ; ກົດໝາຍວ່າດ້ວຍສັດປ່າ; ກົດໝາຍວ່າດ້ວຍການພິມຈຳໜ່າຍ; ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແລະ ກົດໝາຍວ່າດ້ວຍສານທະຫານ;

12. ບົດລາຍງານ ຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ໃນໄລຍະ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 4 ຫາເທື່ອທີ 5 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX.

ນອກນັ້ນ, ຍັງຈະໄດ້ຮັບຟັງການຊີ້ແຈງຂອງພາກສ່ວນກ່ຽວຂ້ອງຈຳນວນໜຶ່ງຕໍ່ຄຳຊັກຖາມຂອງບັນດາສະມາຊິກສະພາແຫ່ງຊາດ.

ຕາມວາລະດຳເນີນກອງປະຊຸມ ໃນພາກເຊົ້າພາຍຫຼັງການກ່າວສູນທອນພິດຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແລ້ວ, ທ່ານ ສອນໄຊ ສີພັນດອນ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານພົ້ນເດັ່ນຂອງລັດຖະບານ 6 ເດືອນຕົ້ນປີ ແລະ ສະເໜີທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023; ຈາກນັ້ນ, ທ່ານລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023; ທິດທາງການລົງທຶນຂອງລັດ ປະຈຳປີ 2024, ຫຼັງຈາກນັ້ນ, ທ່ານລັດຖະມົນຕີກະຊວງການເງິນໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023 ແລະ ທ່ານ ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023. ຈາກນັ້ນ, ທ່ານ ສົມມາດ ພົລເສນາ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງລັດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023; ທິດທາງແຜນການລົງທຶນຂອງລັດ ປະຈຳປີ 2024.

ໃນຕອນບ່າຍຂອງວັນດຽວກັນ, ທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ລາຍງານກ່ຽວກັບການຮັບຮອງເອົາການເລືອກຕັ້ງແທນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ທີ່ໄດ້ລາອອກຈາກການເປັນສະມາຊິກສະພາແຫ່ງຊາດຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍໄດ້ເລືອກຕັ້ງເອົາທ່ານ ສາລະພິດ ສູນອໍວະວົງ ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ, ນະຄອນຫຼວງວຽງຈັນ ເຊິ່ງເປັນຜູ້ສະໝັກຮັບເລືອກຕັ້ງທີ່ໄດ້ຮັບຄະແນນສຽງຫຼາຍ ຖັດຈາກຜູ້ໄດ້ຮັບການເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດໃນເຂດເລືອກຕັ້ງດັ່ງກ່າວ.

ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຈະດຳເນີນໄປຈົນຮອດວັນທີ 18 ກໍລະກົດ 2023 ຈຶ່ງຈະສຳເລັດ.

ທ່ານສາມາດສົ່ງຄຳຄິດຄຳເຫັນ ແລະ ກ່ຽວກັບການດຳເນີນກອງປະຊຸມ ຜ່ານໂທລະສັບສາຍດ່ວນ 156 ອີເມວ Nalao.156@gmail.com. App: Lao na.

**(ກົງໃຈ ແສງອຳພັນ)**

## ປະທານສະພາ...

(ຕໍ່ຈາກໜ້າ 1)

ແມ່ນຢູ່ໃນສະພາບການຂອງພາກພື້ນ ແລະ ສາກົນ ທີ່ມີການຜັນແປໄປຢ່າງສະຫຼັບຊັບຊ້ອນ, ເຄັ່ງຮ້ອນ ແລະ ມີຄວາມຫຼໍ່ແຫຼມຫຼາຍດ້ານ ທີ່ຄາດຄະເນໄດ້ຍາກ ເຊິ່ງໄດ້ສົ່ງຜົນກະທົບໂດຍກົງຕໍ່ປະເທດຕ່າງໆໃນໂລກ ລວມທັງ ສປປ ລາວ ຂອງພວກເຮົາ ໂດຍສະເພາະຢ່າງຍິ່ງມີຜົນກະທົບຕໍ່ການແກ້ໄຂສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ພາຍໃນປະເທດຂອງພວກເຮົາ, ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ ພົບຫຼາຍສິ່ງທ້າທາຍໃໝ່ ເປັນຕົ້ນ ເງິນເຟີ້, ອັດຕາແລກປ່ຽນ, ລາຄານ້ຳມັນເຊື້ອໄຟ ແລະ ສິນຄ້າ ໄດ້ມີການເໜັງຕີງເພີ່ມຂຶ້ນ ເຊິ່ງສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນມີຄວາມຝືດເຄືອງ. ແຕ່ດ້ວຍຄວາມເອົາໃຈໃສ່ນຳພາ-ຊີ້ນຳ ຂອງຄະນະບໍລິຫານງານສູນກາງພັກ, ການບໍລິຫານຂອງລັດຖະບານແລະການຕິດຕາມກວດກາຂອງສະພາແຫ່ງຊາດ ໂດຍສະເພາະຢ່າງຍິ່ງການປະສານສົມທົບ, ການປຶກສາຫາລືຮ່ວມກັນ ຢ່າງໃກ້ຊິດ ລະຫວ່າງສະພາແຫ່ງຊາດ ແລະ ລັດຖະບານ, ການປະກອບສ່ວນຂອງພາກສ່ວນຕ່າງໆໃນສັງຄົມ ກໍຄືບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ເພື່ອຊອກມາດຕະການແກ້ໄຂເພື່ອບໍ່ເຮັດໃຫ້ປະເທດເຮົາຕົກ ເຂົ້າສູ່ວິກິດການດ້ານເສດຖະກິດ ຈາກອັນນີ້ ເຮັດໃຫ້ບັນດາຄາດໝາຍໃນການພັດທະນາເສດຖະກິດ-ສັງຄົມ ບາງຄາດໝາຍກໍບັນລຸໄດ້ຕາມແຜນການເຮັດໃຫ້ປະເທດຊາດ ຍັງສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ, ສາມາດປະຄັບປະຄອງເສດຖະກິດ ບໍ່ໃຫ້ຕົກໃນສະພາບຫຍຸ້ງ ຍາກກວ່ານີ້ ແລະ ຮັບປະກັນໃຫ້ສືບຕໍ່ມີການຂະຫຍາຍຕົວ, ແນວທາງການຕ່າງປະເທດຂອງພັກ ໄດ້ຮັບການຈັດຕັ້ງຜັນຂະຫຍາຍຢ່າງເລິກເຊິ່ງ ແລະ ກວ້າງຂວາງ ເຊິ່ງເຮັດໃຫ້ບົດບາດອິດທິພົນຂອງປະເທດເຮົາໄດ້ຮັບການຍົກສູງຢ່າງຕໍ່ເນື່ອງໃນເວທີພາກພື້ນ ແລະ ສາກົນ.

ປະຕິບັດຕາມລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້ ຈະໄດ້ພິຈາລະນາຮັບຮອງບັນດາເນື້ອໃນທີ່ສຳຄັນ ດັ່ງນີ້:

1. ບົດລາຍງານໂດຍສັງເຂບຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບການເຄື່ອນໄຫວວຽກງານພົ້ນເດັ່ນ ຂອງລັດຖະບານ 6 ເດືອນຕົ້ນປີ ແລະ ສະເໜີທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023;

2. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງ ຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023; ທິດທາງການລົງທຶນຂອງລັດປະຈຳປີ 2024;

3. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີແລະ ແຜນການ 6 ເດືອນທ້າຍປີ 2023;

4. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023;

5. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ;

6. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຢາເສບຕິດ;

7. ບົດລາຍງານຂອງລັດຖະບານ ກ່ຽວກັບຮ່າງຍຸດທະສາດການພັດທະນາແຮ່ທາດ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035;

8. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມ;

9. ບົດລາຍງານຂອງລັດຖະບານ ກ່ຽວກັບຍຸດທະສາດການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030;

10. ບົດລາຍງານກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂົງເຂດຍຸຕິທຳ 4 ສະບັບ; ໃນນີ້ ມີ ຂົງເຂດສານປະຊາຊົນສູງສຸດ 2 ສະບັບ ຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ຂົງເຂດຂອງອົງການໄອຍະການປະຊາຊົນສູງສຸດ 2 ສະບັບ ຄື: ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;

11. ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 10 ສະບັບ ໃນນີ້ມີກົດໝາຍສ້າງໃໝ່ 4 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍວຽກງານສາທາລະນະສຸກ, ຮ່າງກົດໝາຍວ່າດ້ວຍການຈັດຫາງານ, ຮ່າງກົດໝາຍວ່າດ້ວຍອາກອນທີ່ດິນ, ຮ່າງກົດໝາຍວ່າດ້ວຍເຢົາວະຊົນລາວ ແລະ ກົດໝາຍປັບປຸງ 6 ສະບັບ ຄື: ກົດໝາຍວ່າດ້ວຍທະນາຄານທຸລະກິດ, ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ, ກົດໝາຍວ່າດ້ວຍສັດປ່າ, ກົດໝາຍວ່າດ້ວຍການພິມຈຳໜ່າຍ, ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແລະ ກົດໝາຍວ່າດ້ວຍສານທະຫານ;

12. ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 4 ຫາເທື່ອທີ 5 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX.

ນອກນັ້ນ, ຍັງຈະໄດ້ຮັບຟັງການຊີ້ແຈງຂອງພາກສ່ວນກ່ຽວຂ້ອງຈຳນວນໜຶ່ງ ຕໍ່ຄຳຊັກຖາມຂອງບັນດາສະມາຊິກສະພາແຫ່ງຊາດ.

ສະພາແຫ່ງຊາດ ຈະພິຈາລະນາ, ປະກອບຄຳເຫັນ ແລະ ຮັບຮອງເອົາຫຼາຍເນື້ອໃນສຳຄັນ ເຊິ່ງເປັນບັນຫາສ້າງຄວາມສົນໃຈໃຫ້ແກ່ຜູ້ມີສິດເລືອກຕັ້ງ, ປະຊາຊົນໃນທົ່ວປະເທດ ກໍຄືພີ່ນ້ອງຮ່ວມຊາດຢູ່ຕ່າງປະເທດ. ເພື່ອພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ທີ່ມີຈຳນວນຫຼາຍຄືດັ່ງກ່າວໃຫ້ມີຄຸນນະພາບ, ປະສິດທິຜົນ ແລະ ບັນລຸຜົນຕາມແຜນການທີ່ວາງໄວ້, ໃນນາມປະທານກອງປະຊຸມ ຂ້າພະເຈົ້າຂໍຮຽກຮ້ອງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງສືບຕໍ່ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນຕໍ່ບັນດາເນື້ອໃນທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມຄັ້ງນີ້, ຮຽກຮ້ອງມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ຈົ່ງໄດ້ນຳໃຊ້ສິດປະຊາທິປະໄຕ ແລະ ເຊີດຊູຄວາມຮັບຜິດຊອບການ ເມືອງຂອງຕົນ ໃນການສຸມໃສ່ຄົ້ນຄວ້າຢ່າງເລິກເຊິ່ງ, ປະກອບສ່ວນປະກອບຄຳເຫັນ ຕໍ່ທຸກບັນຫາຢ່າງຖີ່ຖ້ວນ, ສ້າງສັນ, ພາວະວິໄສ, ມີເຫດມີຜົນ, ຮັດກຸມ ບົນພື້ນຖານແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ສະພາບຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມຂອງປະເທດເຮົາໃນປັດຈຸບັນ ເພື່ອເຮັດໃຫ້ເນື້ອໃນທີ່ນຳມາພິຈາລະນາ, ຮັບຮອງຄັ້ງນີ້ ມີຄຸນນະພາບ ແລະ ສາມາດນຳໄປຈັດຕັ້ງປະຕິ ບັດຢ່າງເປັນຮູບປະທຳຢ່າງແທ້ຈິງ.

ໃນໂອກາດອັນສະຫງ່າລາສີນີ້, ໃນນາມປະທານກອງປະຊຸມ, ຂ້າພະເຈົ້າ ຂໍປະກາດໄຂກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງເປັນທາງການ ນັບແຕ່ເວລານີ້ເປັນຕົ້ນໄປ.

**ຕາງໜ້າຄະນະ...**

(ຕໍ່ຈາກໜ້າ 1)

ບັນຫາລາຄານ້ຳມັນ, ບັນຫາອັດຕາແລກປ່ຽນ ແລະ ຂໍ້ຂັດແຍ້ງທາງດ້ານເສດຖະກິດ-ການເມືອງ ອັນນຳໄປສູ່ໄພເງິນເຟີ້, ລາຄາສິນຄ້າແພງ, ອັດຕາແລກປ່ຽນເໜັງຕີງແຮງ ບວກກັບຂໍ້ຫຍຸ້ງຍາກຈາກປັດໄຈພາຍໃນ ເຊັ່ນ: ຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ປາກົດການຫຍໍ້ທໍ້ຂອງສັງຄົມ, ແຕ່ລັດຖະບານສາມາດຍາດໄດ້ຜົນສຳເລັດ ທີ່ພົ້ນເດັ່ນ ເຊັ່ນ:

1. ລວມຍອດຜະລິດຕະພັນພາຍໃນ (GDP) ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 4,8% (ມະຕິສະພາ 4,5% ຂຶ້ນໄປ), ຂະແໜງກະສິກຳຂະຫຍາຍຕົວ 3,8% (ມະຕິສະພາ 2,5%) ແລະ ຂະແໜງບໍລິການ ຂະຫຍາຍຕົວ 5,6% (ມະຕິສະພາ 4,7%); ການລົງທຶນເພື່ອການພັດທະນາ ປະຕິບັດໄດ້ 55,8% ຂອງແຜນການ (ມະຕິສະພາ 52.098 ຕື້ກີບ), ການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດ ບັນລຸໄດ້ 76% ຂອງແຜນການ (ມະຕິສະພາ 30.890 ຕື້ກີບ);

2. ການປະຕິບັດແຜນງົບປະມານ

(1) ດ້ານລາຍຮັບ:

- ໄດ້ຈັດຕັ້ງປະຕິບັດການທົດລອງມອບຫົວໜ່ວຍວິສາຫະກິດໃຫ້ 9 ແຂວງ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ທ້ອງຖິ່ນຕາມທິດສາມສ້າງ ໃນນີ້ 5 ແຂວງ ເກີນດຸນ 63 ຫົວໜ່ວຍ, ໄດ້ຄົ້ນຄວ້າຍົກລັດຖະບັນຍັດວ່າດ້ວຍພາສີທີ່ດິນ ມາເປັນກົດໝາຍວ່າດ້ວຍອາກອນທີ່ດິນ;

- ການຫັນເປັນທັນສະໄໝ ໃນການຈັດເກັບລາຍຮັບ ເປັນຕົ້ນ ການຈັດເກັບຄ່າທຳນຽມທາງ, ພາສີທີ່ດິນ, ຂະຫຍາຍຖານອາກອນມູນຄ່າເພີ່ມ ແລະ ອື່ນໆ;

- ປະຕິບັດແຜນລາຍຮັບງົບປະມານ ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 18.424 ຕື້ກີບ ເທົ່າກັບ 48% ຂອງແຜນການປີ ສົມທຽບໃສ່ GDP ໄດ້ 15,55% (ມະຕິສະພາແຫ່ງຊາດ 16,42%). ໃນນັ້ນ ລາຍຮັບພາຍໃນ ປະຕິບັດໄດ້ 14.848 ຕື້ກີບ ເທົ່າກັບ 43% ຂອງແຜນການປີ ຫຼື ເທົ່າກັບ 6,43% ຂອງ GDP; ແຕ່ຍ້ອນການຜັນຜວນຂອງອັດຕາແລກປ່ຽນ, ເງິນເຟີ້ເພີ່ມສູງແລະເງິນກີບອ່ອນຄ່າ ໄດ້ສົ່ງຜົນກະທົບທາງລົບ ຕໍ່ການພັດທະນາເສດຖະກິດ-ສັງຄົມ ກໍຄືຊີວິດການເປັນຢູ່ ຂອງພະນັກງານ-ລັດຖະກອນ, ທະຫານຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ.

(2) ດ້ານລາຍຈ່າຍ: ລັດຖະບານ ໄດ້ມີຄວາມພະຍາຍາມໃນການປະຕິບັດແຜນລາຍຈ່າຍການລົງທຶນຂອງລັດ ໂດຍການໃຫ້ບຸລິມະສິດ ການແກ້ໄຂໜີ້ສິນການລົງທຶນຂອງລັດທີ່ຄ້າງຊຳລະ, ໂດຍປະຕິບັດຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງ ປີ 2015 ແລະ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບປີ 2020, ໃນເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດປະຊຸມຄະນະປະຈຳສະພາແຫ່ງຊາດ ໄດ້ຄົ້ນຄວ້າພິຈາລະນາ ແລະ ຮັບຮອງ ເອົາແຜນການລົງທຶນຂອງລັດ ປີ 2023 ແລະ ແຜນການແກ້ໄຂໜີ້ສິນ ດ້ວຍການອອກພັນທະບັດອ່ອຍໜີ້ 3 ແຈ ຈຳນວນ 8.000 ຕື້ກີບ (ຕາມມະຕິຄະນະປະຈຳສະພາແຫ່ງຊາດ ເລກທີ 29/ຄປຈ, ລົງວັນທີ 15 ກຸມພາ 2023) ເຊິ່ງເມື່ອລວມທຶນ ຈຳນວນ 8.000 ຕື້ກີບ ເຂົ້າໃນເພດານລົງທຶນຂອງລັດປົກກະຕິ ປີ 2023 ຈຳນວນ 2.500 ຕື້ກີບ ແລ້ວເທົ່າກັບ 10.500 ຕື້ກີບ ເຮັດໃຫ້ໂຄງປະກອບການລົງທຶນຂອງລັດປົກກະຕິ ໃນປີ 2023 ທີ່ໄດ້ຮັບຮອງ ໃນກອງປະຊຸມສະໄໝສາມັນເທື່ອທີ 4 ມີການປ່ຽນແປງດ້ານອັດຕາສ່ວນ ດັ່ງນີ້:

- ໂຄງການຊຳລະໜີ້ສິນ ກວມ 84,80%;

- ໂຄງການສືບຕໍ່ ກວມ 12,21%;

- ໂຄງການສະເໜີໃໝ່ ກວມ 3% ຂອງທຶນທັງໝົດ.

ດັ່ງນັ້ນ, ຈຶ່ງລາຍງານໃຫ້ບັນດາທ່ານ ສະມາຊິກສະພາແຫ່ງຊາດ ໄດ້ຮັບຊາບ ກ່ຽວກັບໂຄງປະກອບການລົງທຶນຂອງລັດ ໃນປີ 2023.

3. ການປະຕິບັດແຜນເງິນຕາ.

ດ້ານນິຕິກຳ ໄດ້ຄົ້ນຄວ້າ, ດຳເນີນນະໂຍບາຍ ແລະ ມາດຕະການດ້ານເງິນຕາ, ປັບປຸງກົດໝາຍ ແລະ ນິຕິກຳ ເພື່ອສ້າງເງື່ອນໄຂ ໃນການສົ່ງເສີມການນຳໃຊ້ເງິນກີບ ໃຫ້ຫຼາຍຂຶ້ນ;

ຄຸ້ມຄອງເງິນຕາຕ່າງປະເທດ, ແກ້ໄຂຮ້ານແລກປ່ຽນນອກລະບົບ, ປັບປຸງຖານຂໍ້ມູນສະຖິຕິທະນາຄານ, ຄັງສຳຮອງເງິນຕາຕ່າງປະເທດເພີ່ມຂຶ້ນ ກຸ້ມການນຳເຂົ້າໄດ້ 4 ເດືອນ (ມະຕິສະພາ ບໍ່ໃຫ້ຫຼຸດ 3 ເດືອນ);

ການປະຕິບັດຄາດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ມີຄວາມຄືບໜ້າຫຼາຍຄາດໝາຍເປັນຕົ້ນ ອັດຕາການຕາຍຂອງແມ່ ແລະ ເດັກ, ວຽກງານໂພຊະນາການ; ການດຶງດູດນັກທ່ອງທ່ຽວຕ່າງປະເທດເຂົ້າມາທ່ອງທ່ຽວໃນ ສປປ ລາວ ມີຈຳນວນເພີ່ມຂຶ້ນ;

ຄຽງຄູ່ກັບຜົນສຳເລັດດັ່ງກ່າວ, ອີງຕາມການລາຍງານຂອງລັດຖະບານ ແລະ ການຕິດຕາມກວດກາຂອງສະພາແຫ່ງຊາດ ເຫັນວ່າ ມີຫຼາຍຄາດໝາຍມີຄວາມສ່ຽງ ທີ່ຈະບໍ່ສາມາດປະຕິບັດບັນລຸໄດ້ຕາມແຜນການ ເປັນຕົ້ນ:

(1) ລາຍໄດ້ສະເລ່ຍຕໍ່ຫົວຄົນ ທີ່ຄິດໄລ່ເປັນເງິນໂດລາ ມີທ່າອ່ຽງຈະບໍ່ສາມາດບັນລຸໄດ້ ຕາມມະຕິສະພາແຫ່ງຊາດ, ເນື່ອງຈາກເງິນກີບອ່ອນຄ່າ (ມະຕິສະພາແຫ່ງຊາດ GDP/ຄົນ 1.625 USD, GNI/ຄົນ 1.534 USD);

(2) ເຖິງວ່າສາມາດເກັບລາຍຮັບງົບປະມານໄດ້ຫຼາຍຂຶ້ນ ແຕ່ໃນຕົວຈິງ ແມ່ນຍ້ອນສະພາບເງິນເຟີ້, ການຜັນຜວນຂອງອັດຕາແລກປ່ຽນ, ເງິນກີບອ່ອນຄ່າ, ລາຍຮັບທີ່ເປັນເງິນຕາຕ່າງປະເທດ ບໍ່ພຽງພໍຕໍ່ການຊຳລະທີ່ເປັນເງິນຕາຕ່າງປະເທດ ແລະ ບໍ່ສາມາດຕອບສະໜອງລາຍຈ່າຍ ໃຫ້ໄປຕາມແຜນການກຳນົດໄວ້;

(3) ການຈັດສັນງົບປະມານການລົງທຶນຂອງລັດ ບໍ່ສາມາດປະຕິບັດໄດ້ຕາມມະຕິສະພາແຫ່ງຊາດ ທີ່ກຳນົດໃຫ້ຈັດສັນແກ່ໂຄງການຊຳລະໜີ້ສິນ, ໂຄງການສືບຕໍ່ ແລະ ໂຄງການສະເໜີໃໝ່ ຕາມໂຄງປະກອບ 60:30:10;

ອັດຕາເງິນເຟີ້ 5 ເດືອນຕົ້ນປີ 40,26% ສູງເກີນມະຕິສະພາແຫ່ງຊາດກຳນົດ (ມະຕິສະພາແຫ່ງຊາດ ສະເລ່ຍໝົດປີ ບໍ່ເກີນ 9%);

(4) ກະແສລາຍຮັບເງິນຕາ ຈາກການສົ່ງອອກ ຜ່ານລະບົບທະນາຄານຍັງບໍ່ສາມາດປະຕິບັດໄດ້ (ມະຕິສະພາແຫ່ງຊາດ ບໍ່ຫຼຸດ 50%);

(5) ປະລິມານເງິນ M2 ເພີ່ມຂຶ້ນ ໃນຈັງຫວະທີ່ຊ້າລົງທຽບໃສ່ປີຜ່ານມາ, ເຖິງວ່າໄດ້ມີຄວາມພະຍາຍາມ ຫັນເປັນທັນສະໄໝ ໃນການຊຳລະສະສາງ ຂອງທະນາຄານ ແລະ ປັບປຸງລະບົບອັດຕາແລກປ່ຽນເງິນຕາ ໃຫ້ໄປຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ;

(6) ຄາດໝາຍໃນຂົງເຂດວັດທະນະທຳ-ສັງຄົມ, ການພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຍັງມີຫຼາຍຄາດໝາຍທີ່ມີຄວາມສ່ຽງຈະບໍ່ສາມາດບັນລຸໄດ້.

ນອກຈາກບັນຫາທີ່ໄດ້ກ່າວມາຂ້າງເທິງແລ້ວ, ຄະນະປະຈຳສະພາແຫ່ງຊາດ ເຫັນວ່າ ໃນ 6 ເດືອນຕົ້ນປີ 2023 ໄດ້ມີບາງບັນຫາທີ່ເປັນອຸປະສັກ ແລະ ສິ່ງທ້າທາຍຕໍ່ການພັດທະນາເສດຖະກິດ-ສັງຄົມ ທີ່ລັດຖະບານ ຈະຕ້ອງໄດ້ສືບຕໍ່ແກ້ໄຂ ເປັນຕົ້ນ:

- ອັດຕາເງິນເຟີ້ ແລະ ລາຄາສິນຄ້າເຄື່ອງອຸປະໂພກ ແລະ ບໍລິໂພກ ເພີ່ມຂຶ້ນສູງ, ຄວາມສາມາດໃນການຊື້ຕ່ຳ ເຊິ່ງໄດ້ສົ່ງຜົນກະທົບໂດຍກົງຕໍ່ຊີວິດການເປັນຢູ່ຂອງພະນັກງານ-ລັດຖະກອນ, ທະຫານຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ມີຄວາມຝືດເຄືອງ;

- ການທຳລາຍປ່າໄມ້, ການຈູດປ່າ, ການລະເມີດກົດໝາຍວ່າດ້ວຍປ່າໄມ້ເພີ່ມຂຶ້ນ;

- ສະພາບການຂາດເຂີນແຮງງານ ແລະ ສະພາບຫວ່າງງານ ເພີ່ມຂຶ້ນ;

- ປະກົດການຫຍໍ້ທໍ້ຂອງສັງຄົມ ເກີດຂຶ້ນຫຼາຍ;

- ຜົນກະທົບ ຂອງໂຄງການພັດທະນາ ເປັນຕົ້ນ ຂຸດຄົ້ນບໍ່ແຮ່ຢູ່ຫຼາຍພື້ນທີ່ ຍັງສົ່ງຜົນກະທົບຕໍ່ປະຊາຊົນເປັນຈຳນວນບໍ່ໜ້ອຍ.

II. ຕໍ່ກັບພາກທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023.

ຄະນະປະຈຳສະພາແຫ່ງຊາດ ເຫັນດີໂດຍພື້ນຖານ ຕໍ່ທິດທາງ ແລະ ແຜນວຽກງານຈຸດສຸມ 6 ເດືອນທ້າຍປີ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ, ເພື່ອຮັບປະກັນ ໃຫ້ບັນລຸຕາມທິດທາງ ແລະ ແຜນວຽກຈຸດສຸມດັ່ງກ່າວ, ຄະນະປະຈຳສະພາແຫ່ງຊາດ ສະເໜີໃຫ້ເອົາໃຈໃສ່ບາງມາດຕະການເພີ່ມເຕີມດັ່ງນີ້:

1. ສຸມໃສ່ປະຕິບັດຄາດໝາຍ ຂອງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ແລະ ວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ໄດ້ກຳນົດໃນມະຕິກອງປະຊຸມສະພາແຫ່ງຊາດ ສຳລັບປີ 2023 ໃຫ້ບັນລຸຕາມແຜນການ ດ້ວຍການຈັດຕັ້ງປະຕິບັດບັນດາມາດຕະການ ທີ່ໄດ້ກຳນົດ ໃຫ້ເຂັ້ມງວດ;

2. ສຸມໃສ່ແກ້ໄຂບັນຫາທີ່ເຄັ່ງຮ້ອນ ດ້ານເສດຖະກິດ-ສັງຄົມ ໃນປະຈຸບັນ ເປັນຕົ້ນ:

1) ແກ້ໄຂບັນຫາເງິນເຟີ້ ແລະ ລາຄາສິນຄ້າ ທີ່ກະທົບຕໍ່ຊີວິດການເປັນຢູ່ ຂອງປະຊາຊົນ ໂດຍໃຫ້ມີການຄົ້ນຄວ້າ ແລະ ການກຳນົດມາດຕະການທີ່ຄົບຊຸດ ຕິດພັນ ແລະ ການມີສ່ວນຮ່ວມຂອງທຸກຂະແໜງການ ຄື: ມາດຕະການທາງດ້ານເງິນຕາ ລວມທັງບັນດາມາດຕະການກ່ຽວກັບອັດຕາແລກປ່ຽນ; ມາດຕະການດ້ານການເງິນ-ງົບປະມານ; ມາດຕະການດ້ານການຜະລິດ; ມາດຕະການດ້ານການຄ້າ; ມາດຕະການດ້ານຈິດຕະສາດສັງຄົມ;

2) ແກ້ໄຂບັນຫາເຄັ່ງຮ້ອນທາງດ້ານສັງຄົມ ເປັນຕົ້ນ ບັນຫາຢາເສບຕິດ-ປຸ້ນຈີ້-ອຸປະຕິເຫດຕາມທ້ອງຖະໜົນ; ການສ້າງວຽກເຮັດງານທຳ, ການສະໜອງ ແລະ ຄວາມຕ້ອງການແຮງງານໃຫ້ມີຄວາມສົມດູນ ແລະ ຕອບສະໜອງຄວາມຕ້ອງການ ຂອງການພັດທະນາ; ບັນຫາ ຄູ-ແພດ ອາສາສະໝັກ; ບັນຫາຄວາມທຸກຍາກ ແລະ ຄ່າຄອງຊີບຂອງປະຊາຊົນ ທີ່ສູງຂຶ້ນຢ່າງຕໍ່ເນື່ອງ; ການບໍລິການອອກປຶ້ມ-ໜັງສືຜ່ານແດນ, ການອອກໃບຕາດິນ ໃຫ້ປະຊາຊົນ ຍັງຊັກຊ້າ ແລະ ມີຊ່ອງຫວ່າງ;

3) ແກ້ໄຂບັນຫາເຄັ່ງຮ້ອນ ທາງດ້ານສິ່ງແວດລ້ອມ ເປັນຕົ້ນ ບັນຫາການຂຸດຄົ້ນແຮ່ທາດທີ່ບໍ່ໄປຕາມກົດໝາຍ, ການບຸກລຸກທີ່ດິນລັດ-ປະຊາຊົນ, ການທຳລາຍປ່າໄມ້ ແລະ ແຫຼ່ງນ້ຳ, ຄຸນນະພາບອາກາດ (ມົນລະພິດຈາກຄວັນ-ຝຸ່ນ PM2.5), ມາດຕະການຕ້ານແລ້ງ-ຕ້ານຖ້ວມ ແລະ ໄພທຳມະຊາດອື່ນ ທີ່ມີຄວາມສ່ຽງຈະເກີດຂຶ້ນໃນຕໍ່ໜ້າ, ຂຶ້ນທະບຽນອອກໃບຕາດິນຂອງສູນກາງ-ທ້ອງຖິ່ນ ໃຫ້ເປັນລະບົບຄົບຊຸດ ແລະ ສຳເລັດຕາມຄາດໝາຍແຜນການ ເພື່ອເພີ່ມລາຍຮັບໃຫ້ແກ່ປະເທດ;

3. ເອົາໃຈໃສ່ແກ້ໄຂຜົນການກວດສອບ-ກວດກາ ຕາມທີ່ໄດ້ກຳນົດ ໃນມະຕິກອງປະຊຸມສະພາແຫ່ງຊາດ;

4. ສຸມໃສ່ກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປີ 2024 ຕິດພັນກັບບັນຊີລົງທຶນຂອງລັດ ໂດຍມີການປະສານສົມທົບກັບສະພາແຫ່ງຊາດ ກ່ອນນຳສະເໜີຕໍ່ກອງປະຊຸມ ສະໄໝສາມັນ ເທື່ອທີ 6 ຕາມທີ່ໄດ້ກຳນົດໃນກົດໝາຍ.

5. ສຳລັບທິດທາງແຜນການລົງທຶນຂອງລັດ ປີ 2024 ມີດັ່ງນີ້:

- ໃນການສ້າງແຜນ, ການຈັດສັນ, ໂຄງປະກອບ, ເພດານການລົງທຶນລັດ ແລະ ການພິຈາລະນາຮັບຮອງແຜນການລົງທຶນ ໃຫ້ປະຕິບັດຕາມຂັ້ນຕອນ ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ມາດຕາ 56 ແລະ ກົດໝາຍວ່າດ້ວຍການລົງທຶນຂອງລັດ ມາດຕາ 38, 39 ແລະ ມາດຕາອື່ນທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ ໂດຍມີການເຂົ້າຮ່ວມແຕ່ຫົວທີຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ;

- ຄົ້ນຄວ້າພິຈາລະນາເພີ່ມງົບປະມານ ໃສ່ການລົງທຶນຂອງລັດ ໃຫ້ອັດຕາສ່ວນເພີ່ມຂຶ້ນ ບົນພື້ນຖານແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຮັບປະກັນ ໃຫ້ບັນລຸຄາດໝາຍຂອງແຕ່ລະຂະແໜງການ;

- ນຳໃຊ້ຜົນກອງປະຊຸມສຳມະນາວິທະຍາສາດວ່າດ້ວຍເພີ່ມທະວີ ການຄຸ້ມຄອງການລົງທຶນລັດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ໃນການກຳນົດຫຼັກການລົງທຶນ, ກົນໄກການປະສານງານ ແລະ ເຕັກນິກການຈັດສັນທຶນ ໃຫ້ເປັນຮູບປະທຳ ເປັນຕົ້ນ ນຳໃຊ້ຫຼັກການຈັດສັນທຶນ ແບບມີຈຸດສຸມ, ຍຸຕິທຳ ແລະ ສະເໝີພາບ;

- ຄົ້ນຄວ້າຈັດປະເພດໂຄງການລົງທຶນລັດ ໃຫ້ມີແຕ່ 2 ປະເພດ ຄື ໂຄງການລົງທຶນຂອງລັດລະດັບຊາດ ແລະ ໂຄງການລົງທຶນຂອງລັດປົກກະຕິ ຕາມກົດໝາຍວ່າດວ້ຍການລົງທຶນລັດ ມາດຕາ 16, ສຳລັບໂຄງການລົງທຶນຂອງລັດລະດັບຊາດ ໃຫ້ສະພາແຫ່ງຊາດຄົ້ນຄວ້າ ແລະ ພິຈາລະນາຮັບຮອງ;

- ໃຫ້ສຸມການລົງທຶນໃສ່ການຊຳລະໜີ້ສິນ ໃຫ້ແກ່ໂຄງການກໍ່ສ້າງສຳເລັດ 100% ທີ່ຄ້າງຊຳລະມາດົນ ໃຫ້ໄດ້ກວມອັດຕາສ່ວນຫຼາຍ;

ອ່ານຕໍ່ສະບັບໜ້າ

## ນາຍົກ...

(ຕໍ່ຈາກໜ້າ 1)

ການຫັນການເກັບລາຍຮັບເປັນທັນສະໄໝ ແລະ ອອກນິຕິກຳລຸ່ມກົດໝາຍຈຳນວນໜຶ່ງ, ສຸມໃສ່ສ້າງຖານອາກອນມູນຄ່າເພີ່ມ ໄດ້ 10.887 ຫົວໜ່ວຍ ໃນຈຳນວນທັງໝົດ 14.657 ຫົວໜ່ວຍໃນຂອບເຂດທົ່ວປະເທດ ກວມເອົາ 74% ແລະ ໄດ້ຊຸກຍູ້ ແລະ ບັງຄັບໃຫ້ຫົວໜ່ວຍທຸລະກິດ ຖືບັນຊີໃນຂອບເຂດໄດ້ 14.283 ຫົວໜ່ວຍ, ໄດ້ສຸມໃສ່ຊຸກຍູ້ ແລະ ຕິດຕາມການເກັບລາຍຮັບຈາກຫົວໜ່ວຍລາຍຮັບໃຫຍ່ທີ່ມີແລ້ວຜ່ານມາ ໄດ້ເພີ່ມຂຶ້ນທຽບໃສ່ປີຜ່ານມາ (ຢ່າງເຊັ່ນ: ເກັບລາຍຮັບຈາກບໍລິສັດ ພູເບ້ຍມາຍນິ້ງ ໄດ້364ຕື້ກີບເພີ່ມຂຶ້ນ463% ຫຼື ເພີ່ມຂຶ້ນ 299 ຕື້ກີບທຽບໃສ່ປີຜ່ານມາ, ບໍລິສັດລ້ານຊ້າງມິເນໂຣ ໄດ້ 460 ຕື້ກີບ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 59% ຫຼື ເປັນເງິນ 195 ຕື້ກີບ, ບໍລິສັດແຮ່ເຫຼັກ ໂກອີໂກ ຈຳກັດຜູ້ດຽວ ໄດ້ 191 ຕື້ກີບ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 435% ຫຼື ເປັນເງິນ 155 ຕື້ກີບ, ບໍລິສັດເທີນຫີນບູນ ພາວເວີ້ຈຳກັດ ໄດ້ 276 ຕື້ກີບ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 21% ຫຼື ເປັນເງິນ 48 ຕື້ກີບ, ບໍລິສັດກຸ້ຣຸ້ນລາວ ໄດ້ 121 ຕື້ກີບ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 751% ຫຼື ເປັນເງິນ 107 ຕື້ກີບ); ໄດ້ມອບຫົວໜ່ວຍວິສາຫະກິດທີ່ສູນກາງຄຸ້ມຄອງໃຫ້ 101 ຫົວໜ່ວຍ ໃຫ້ 9 ແຂວງ ເປັນຜູ້ເກັບ ເຊິ່ງຜ່ານການຈັດຕັ້ງປະຕິບັດເຫັນວ່າ ມີ 5 ແຂວງ ທີ່ກວມເອົາ 69 ຫົວໜ່ວຍສາມາດເກັບໄດ້ເກີນດຸນ ແລະ ເກັບໄດ້ເພີ່ມຂຶ້ນເຖິງ 41%ທຽບໃສ່ປີຜ່ານມາ; ການເຮັດທົດລອງແຮ່ທາດ ສາມາດສ້າງລາຍຮັບທີ່ເປັນຄ່າຊື້ສິດສຳປະທານ, ຄ່າຊັບພະຍາກອນທຳມະຊາດລ່ວງໜ້າ ແລະ ລາຍຮັບຈາກການສົ່ງອອກແຮ່ທາດ ໄດ້ເປັນເງິນກີບ 105 ຕື້ກີບ ແລະ ເປັນເງິນໂດລາໄດ້ 48,71 ລ້ານໂດລາ, ນອກຈາກນັ້ນ, ຍັງໄດ້ທົດລອງປະຕິບັດໂຄງການຂຸດຄົ້ນ Bitcoin ແລະ ຊື້-ຂາຍເງິນຄຣິບໂຕ ເຊິ່ງສາມາດສ້າງລາຍຮັບເປັນເງິນກີບ 5,7 ຕື້ກີບ ແລະ ເປັນເງິນໂດລາ 26,5 ລ້ານໂດລາ (ຄ່າລິຂະສິດ, ຄ່າອາກອນມອບເໜົາ), ມູນຄ່າການຊົມໃຊ້ໄຟຟ້າ ເປັນຈຳນວນ 195,5 ລ້ານໂດລາ ສາມາດແກ້ໄຂບັນຫາກະແສໄຟຟ້າເຫຼືອໃນບາງບ່ອນ. ສະນັ້ນ, ຈຶ່ງເຮັດໃຫ້ການເກັບລາຍຮັບງົບປະມານມາຮອດໝົດເດືອນພຶດສະພາ 2023 ບັນລຸໄດ້ 15.155 ຕື້ກີບ ຫລື ປະມານ 39% ຂອງແຜນການປີ(ຕາມມະຕິສະພາ: ແຜນລາຍຮັບໝົດປີ 38.448 ຕື້ກີບ)ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 41% ຫຼື ເປັນເງິນ 4.495 ຕື້ກີບ). ໃນນັ້ນ ພົ້ນເດັ່ນແມ່ນລາຍຮັບພາຍໃນສາມາດບັນລຸໄດ້ 11.848ຕື້ກີບ, ເທົ່າກັບ43% ຂອງແຜນການປີ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ, ຄາດຄະເນລາຍຮັບ 6 ເດືອນຈະປະຕິບັດໄດ້ປະມານ 18.424 ຕື້ກີບ ເທົ່າກັບ 48%, ໃນນີ້ພົ້ນເດັ່ນ ມາຮອດໝົດເດືອນພຶດສະພາ ມີ 9 ແຂວງສາມາດເກັບລາຍຮັບໄດ້ເກີນ 50% ແລ້ວ.

3. ການປະຕິບັດລາຍຈ່າຍງົບປະມານ: ລັດຖະບານປະຕິບັດລາຍຈ່າຍງົບປະມານບົນຈິດໃຈປະຢັດ ຕາມດຳລັດວ່າດ້ວຍການປະຢັດ ແລະ ຕ້ານການຟຸມເຟືອຍ ກົດດຳລັດວ່າດ້ວຍລົດຂອງລັດ ຢ່າງເປັນເຈົ້າການ. ພ້ອມນັ້ນ, ຍັງສາມາດປະຕິບັດລາຍຈ່າຍງົບປະມານໄປຕາມແຜນການ ແລະ ຮັບປະກັນການເບີກຈ່າຍທີ່ຈຳເປັນໄດ້ຕາມປົກກະຕິເປັນຕົ້ນ: ເງິນເດືອນ, ເງິນນະໂຍບາຍ, ການຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດ ແລະ ອື່ນໆ. ລາຍຈ່າຍງົບປະມານມາຮອດໝົດເດືອນພຶດສະພາ ສາມາດບັນລຸໄດ້ 10.905 ຕື້ກີບ ເທົ່າກັບ 25% ຂອງແຜນການປີ, ລາຍຈ່າຍຕົ້ນຕໍແມ່ນສຸມໃສ່ການເບີກຈ່າຍເງິນເດືອນ ແລະ ເງິນອຸດໜູນ ເຊິ່ງເກືອບ 100% ແມ່ນສາມາດເບີກຈ່າຍໄດ້ບໍ່ກາຍວັນທີ 25 ຂອງທຸກໆເດືອນ (ຍົກເວັ້ນ 2 ກຳລັງ), ສຸມໃສ່ຈ່າຍຊຳລະໜີ້ສິນຕ່າງປະເທດຕາມສັນຍາ. ພ້ອມກັນນັ້ນ, ກໍໄດ້ມີທິດນໍາໃຫ້ບັນດາແຂວງປະຕິບັດເງິນເກີນແຜນປີ 2022 ໂດຍໃຫ້ແຂວງສາມາດນຳໃຊ້ 80% ເພື່ອແກ້ໄຂໜີ້ສິນ ແລະ ກະຕຸ້ນເສດຖະກິດໃນລະດູຝົນ.

4. ໄດ້ເອົາໃຈໃສ່ຊີ້ນຳ-ບັນຊາການປະຕິບັດ 5 ແຜນວຽກຈຸດສຸມໃນປີ 2023 ຂອງລັດຖະບານ:

- ການແກ້ໄຂໜີ້ສິນລັດຖະບານ ໄດ້ສືບຕໍ່ເອົາໃຈໃສ່ເປັນພິເສດຕໍ່ການຄຸ້ມຄອງ ແລະ ແກ້ໄຂບັນຫາໜີ້ສິນ ໄປຕາມຂອບແຜນທີ່ໄດ້ກຳນົດໄວ້ ແລະ ສາມາດປະຄັບປະຄອງໃນການຊຳລະໜີ້ສິນໄດ້ ໂດຍສາມາດເຮັດໃຫ້ປະເທດເຮົາ ບໍ່ໃຫ້ຕົກເປັນປະເທດທີ່ຊຳລະໜີ້ສິນບໍ່ໄດ້, ໃນນັ້ນ ໄດ້ສຸມໃສ່ແກ້ໄຂໜີ້ສິນຕ່າງປະເທດ ໂດຍການເຈລະຈາດັດແກ້ໂຄງສ້າງໜີ້ ແລະ ເລື່ອນໄລຍະເວລາການຊຳລະອອກໄປຕື່ມ, ພ້ອມກັນນັ້ນ ກໍໄດ້ເຈລະຈາກັບບັນດາບໍລິສັດພາຍໃນຈຳນວນໜຶ່ງທີ່ກູ້ຢືມເງິນຈາກທະນາຄານໃນເມື່ອກ່ອນ ໃຫ້ດັດແກ້ສັນຍາເງິນກູ້ ໂດຍດັດແກ້ຈາກໄລຍະເວລາເລີ່ມຊຳລະຕົ້ນທຶນໃນປີ 2028 ມາໃຫ້ເລີ່ມຊຳລະໃນປີ 2023, ຊຶ່ງສາມາດໄດ້ເງິນຈາກບັນດາບໍລິສັດດັ່ງກ່າວ ມາແກ້ໄຂໜີ້ສິນປະມານ 40 ລ້ານກວ່າໂດລາ. ນອກນັ້ນ, ກໍໄດ້ເຈລະຈາດັດແກ້ສັນຍາເງິນກູ້ກັບ 5 ກຸ່ມບໍລິສັດໃຫຍ່ ກວມເອົາ 90% ຂອງຍອດໜີ້ຂອງ 17 ບໍລິສັດ ທີ່ກູ້ຢືມນຳລັດຖະບານ ເຊິ່ງຕາມສັນຍາດັດແກ້ປີນີ້ ຄາດວ່າຈະໄດ້ເງິນຕົວຈິງປະມານ 30% ຂອງມູນຄ່າທີ່ໄດ້ເຊັນສັນຍາດັດແກ້ນັ້ນ ເຊິ່ງຈະສາມາດເປັນກຳລັງແຮງໜຶ່ງທີ່ສຳຄັນໃຫ້ແກ່ຄັງສຳຮອງເງິນຕາຂອງພວກເຮົາ. ພ້ອມນັ້ນ, ກໍໄດ້ສຸມໃສ່ການແກ້ໄຂໜີ້ສິນໂຄງການລົງທຶນລັດ ດ້ວຍຮູບການອ່າຍໜີ້ 3 ແຈ ບ້ອງ 8.000 ຕື້ກີບ ສາມາດຈັດສັນສຳເລັດແລ້ວ ແລະ ປະຕິບັດໄດ້ 600 ຕື້ກີບ.

- ການແກ້ໄຂບັນຫາຢາເສບຕິດ: ໄດ້ສຸມໃສ່ກວດກາ, ລາດຕະເວນ ເຊິ່ງໃນໄລຍະເກືອບ 6 ເດືອນ ສາມາດແກ້ໄຂມ້າງລາຍຄະດີຢາເສບຕິດໄດ້ທັງໝົດ: 2.240 ເລື່ອງ, ຍຶດຢາບ້າ ໄດ້ 33.93 ລ້ານເມັດ,ນ້ຳໜັກລວມ3.393,19 ກິໂລກຣາມ,ເຮໂຣອິນ184,07 ກິໂລກຣາມ, ຢາຝິ່ນ 125,35 ກິໂລກຣາມ ແລະ ສິ່ງເສບຕິດອື່ນ, ພ້ອມກັນນັ້ນ ຍັງຍຶດວັດຖຸດິບ ແລະ ສານເຄມີທີ່ຈະໄປຜະລິດສິ່ງເສບຕິດໄດ້ອີກຈຳນວນຫຼາຍ ຄື: ຢຶດແປ້ງຝຸ່ນປະສົມຢາເສບຕິດ 26.235,53 ກິໂລກຣາມ, ສານເຄມີຕົ້ນປະເພດທາດແຫຼວ ແລະ ກ້ອນ 61 ໂຕນ. ນອກນັ້ນ ຍັງຢຶດລົດໃຫຍ່ໄດ້ 46 ຄັນ, ລົດຈັກ 205 ຄັນ, ໄດ້ສຳຫຼວດເນື້ອທີ່ລັກລອບປູກຝິ່ນ ຢູ່ 8 ແຂວງພາກເໜືອ ກວດພົບສວນຝິ່ນ ເນື້ອທີ່ 357,6 ເຮັກຕາ ແລະ ໄດ້ທຳລາຍຖິ້ມ ຈຳນວນ 251,7 ເຮັກຕາ, ໄດ້ສຸມໃສ່ປິ່ນປົວຜູ້ຕິດຢາ ຢູ່ສູນບຳບັດປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ 13 ແຫ່ງ, ມີທັງໝົດ 2.648 ຄົນ, ສາມາດປິ່ນປົວດີແລ້ວກັບຄືນບ້ານມີ 259 ຄົນ. ພ້ອມທັງ ໄດ້ເອົາໃຈໃສ່ຈັດສັນເນື້ອທີ່ດິນສຳລັບໂຄງການປູກພືດ ເພື່ອທົດແທນການປູກຝິ່ນຢູ່ບັນດາແຂວງພາກເໜືອ. ນອກນັ້ນ ກໍໄດ້ເອົາໃຈໃສ່ເປັນພິເສດວຽກງານໂຄສະນາ, ສຶກສາອົບຮົມ ດ້ວຍຫຼາຍຮູບການ ແລະ ຫຼາຍວິທີ ທັງເຜີຍແຜ່ຢູ່ບັນດາສະຖາບັນການສຶກສາ, ໂຮງຮຽນ ແລະ ໃຫ້ພໍ່ແມ່ປະຊາຊົນຢູ່ບັນດາບ້ານ ຮັບຮູ້ ແລະ ເຂົ້າໃຈຕໍ່ພິດຮ້າຍຂອງຢາເສບຕິດ ເພື່ອໃຫ້ສັ່ງສອນລູກຫຼານຂອງຕົນ ບໍ່ໄປຫຍຸ້ງກ່ຽວກັບຢາເສບຕິດ.

ອ່ານຕໍ່ສະບັບໜ້າ

## ກະຊວງການເງິນ...

(ຕໍ່ຈາກໜ້າ 1)

ນຍ, ລົງວັນທີ 31 ມັງກອນ 2023 ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ ປີ 2023 ແລະ ຄຳແນະນຳຂອງກະຊວງການເງິນ ສະບັບເລກທີ 3736/ກງ, ລົງວັນທີ 25 ພະຈິກ 2022 ວ່າດ້ວຍການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປີ 2023, ດັ່ງນີ້:

- ແຜນລາຍຮັບທັງໝົດ: 38.448 ຕື້ກີບ, ເທົ່າກັບ 16,42% ຂອງ GDP ໃນນັ້ນ: ລາຍຮັບພາຍໃນ 34.898 ເທົ່າກັບ 14,90% ຂອງ GDP ຕື້ກີບ ແລະ ລາຍຮັບການຊ່ວຍເຫຼືອລ້າ 3.550 ຕື້ກີບ.
- ແຜນລາຍຈ່າຍທັງໝົດ: 43.498 ຕື້ກີບ ເທົ່າກັບ 18,58% ຂອງ GDP;
- ແຜນຂາດດຸນ: 5.050 ຕື້ກີບ, ເທົ່າກັບ 2,16% ຂອງ GDP (ມູນຄ່າ GDP ເທົ່າກັບ 234.160 ຕື້ກີບ).

ຜ່ານການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ດັ່ງນີ້:

1. ດ້ານລາຍຮັບ

ໃນ 5 ເດືອນຕົ້ນປີ ສາມາດປະຕິບັດໄດ້ 15.155 ຕື້ກີບ ເທົ່າກັບ 39% ຂອງແຜນການປີ (ເທົ່າກັບ 6,47% ຂອງ GDP) ຫຼື ເທົ່າກັບ 71% ຂອງແຜນ 6 ເດືອນຕົ້ນປີ (ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 42% ເປັນເງິນ 4.495 ຕື້ກີບ) ໃນນັ້ນ:

- ລາຍຮັບພາຍໃນ 14.848 ຕື້ກີບ ເທົ່າກັບ 43% ຂອງແຜນການປີ ຫຼື ເທົ່າກັບ 6,34% ຂອງ GDP (ສູນກາງປະຕິບັດໄດ້ 10.303 ຕື້ກີບ ເທົ່າກັບ 39% ຂອງແຜນການປີ ແລະ ລາຍຮັບທ້ອງຖິ່ນ ປະຕິບັດໄດ້ 4.545 ຕື້ກີບ ເທົ່າກັບ 52% ຂອງແຜນການປີ) ແລະ ລາຍຮັບຈາກການຊ່ວຍເຫຼືອລ້າ ປະຕິບັດໄດ້ 307 ຕື້ກີບ, ເທົ່າກັບ 9% ຂອງແຜນການປີ.
- ຄາດຄະເນປະຕິບັດ 6 ເດືອນຕົ້ນປີ ລາຍຮັບທັງໝົດ ຄາດວ່າຈະສາມາດປະຕິບັດໄດ້ ປະມານ 18.424 ຕື້ກີບ ຫຼື ເທົ່າກັບ 48% ຂອງແຜນການປີ ສະເພາະລາຍຮັບພາຍໃນ ຄາດວ່າຈະໄດ້ 17.963 ຕື້ກີບ ເທົ່າກັບ 50% ຂອງແຜນການປີ.

ການຈັດຕັ້ງປະຕິບັດລາຍຮັບທຽບໄລຍະດຽວກັນ ເຫັນວ່າ ເພີ່ມຂຶ້ນ 42% ເນື່ອງມາຈາກການຫັນຄຸ້ມຄອງເກັບລາຍຮັບຜ່ານລະບົບທັນສະໄໝ ຕິດພັນກັບການອັດຊ່ອງວ່າງ ການຮົ່ວໄຫຼ ຂອງລາຍຮັບງົບປະມານຕາມຄຳສັ່ງສະບັບເລກທີ 18/ນຍ ສຳລັບຂັ້ນທ້ອງຖິ່ນ ກໍເຫັນວ່າມີທ່າອ່ຽງເພີ່ມຂຶ້ນ ເຊັ່ນດຽວກັນທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເຊິ່ງມີ 7 ແຂວງ 1 ສາມາດເກັບລາຍຮັບໄດ້ ເກີນ 50% ແຕ່ຍັງມີບາງແຂວງຈຳນວນໜຶ່ງເກັບລາຍຮັບຍັງໄດ້ຕ່ຳບໍ່ເກີນ 30% ຂອງແຜນການປີ.

ສຳລັບຜົນກະທົບຂອງອັດຕາແລກປ່ຽນຕໍ່ກັບການເກັບລາຍຮັບ, ເຖິງແມ່ນວ່າການເກັບລາຍຮັບເປັນສະກຸນເງິນຕາຕ່າງປະເທດ ເພີ່ມຂຶ້ນກໍຕາມ ປະມານ 130% ເມື່ອທຽບໃສ່ປີຜ່ານມາ ເປັນເງິນປະມານ 100 ລ້ານໂດລາ, ແຕ່ກວມເອົາສັດສ່ວນພຽງເລັກໜ້ອຍ ຂອງລາຍຮັບທີ່ສາມາດເກັບໄດ້ຕົວຈິງ ປະມານ 214 ຕື້ກີບ ຫຼື ກວມເອົາ 0,6% ຂອງລາຍຮັບພາຍໃນ.

2. ດ້ານລາຍຈ່າຍ:

ປະຕິບັດໄດ້ 10.905 ຕື້ກີບ, ເທົ່າກັບ 25% ຂອງແຜນການປີ, ໃນນັ້ນ: ຂັ້ນສູນກາງປະຕິບັດໄດ້ 7.721 ຕື້ກີບ, ເທົ່າກັບ 23% ຂອງແຜນການປີ ແລະ ຂັ້ນທ້ອງຖິ່ນປະຕິບັດໄດ້ 3.184 ຕື້ກີບ, ເທົ່າກັບ 39% ຂອງແຜນການປີ ໂດຍໄດ້ສຸມໃສ່ການເບີກຈ່າຍເງິນເດືອນ ແລະ ເງິນນະໂຍບາຍ ເປັນບຸລິມະສິດ ເຊິ່ງສຳເລັດການເບີກຈ່າຍເດືອນມິຖຸນາ ຢູ່ຂັ້ນສູນກາງ ສ່ວນຂັ້ນທ້ອງຖິ່ນແມ່ນສຳເລັດເປັນສ່ວນໃຫຍ່ ແລະ ພວມສືບຕໍ່ເບີກຈ່າຍໃຫ້ສຳເລັດ, ພ້ອມນັ້ນກໍໄດ້ສຸມໃສ່ຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດ ຕາມຂໍ້ຜູກພັນສັນຍາ ແລະ ຮັບປະກັນລາຍຈ່າຍບໍລິຫານຂອງພັກ-ລັດ ທີ່ຈຳເປັນ.

ສຳລັບລາຍຈ່າຍເງິນໂຄງການລົງທຶນຂອງລັດ ເພື່ອບໍ່ໃຫ້ເປັນການຊັກຊ້າຄືປີຜ່ານມາ, ສະນັ້ນ, ກະຊວງການເງິນ ກໍໄດ້ມີທິດນຳ ໃຫ້ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ທີ່ໄດ້ຮັບແຜນລົງທຶນແລ້ວ ສາມາດເບີກຈ່າຍໄດ 45% ຂອງແຜນການປີ, ພ້ອມນັ້ນ ກໍໄດ້ມີທິດນຳການຈັດຕັ້ງປະຕິບັດເງິນເກີນແຜນ ປີ 2022 ໃຫ້ແຂວງສາມາດນຳໃຊ້ 80% ເພື່ອກະຕຸ້ນເສດຖະກິດ ແຕ່ທັງນີ້ ເຊິ່ງໄດ້ເລີ່ມຈັດຕັ້ງປະຕິບັດແຕ່ເດືອນພຶດສະພາ 2023 ເປັນຕົ້ນມາ.

3. ດ້ານດຸນດ່ຽງ:

ໃນ 5 ເດືອນ ສາມາດລະດົມແຫຼ່ງທຶນ ເພື່ອມາດຸນດ່ຽງງົບປະມານພາຍໃນ ແລະ ຕ່າງປະເທດ ໄດ້ 6.170 ຕື້ກີບ, ເທົ່າກັບ 15% ຂອງແຜນການປີ, ໃນນີ້: ອອກພັນທະບັດພາຍໃນ 840 ຕື້ກີບ, ເທົ່າກັບ 8% ຂອງແຜນການປີ ແລະ ກູ້ຢືມເປັນໂຄງການຈາກຕ່າງປະເທດ 5.330 ຕື້ກີບ, ເທົ່າກັບ 18% ຂອງແຜນການປີ. ປະຈຸບັນສາມາດປະຕິບັດໄດ້ 9.042 ຕື້ກີບ ຫຼື ເທົ່າກັບ 22% ຂອງແຜນການປີ.

ສຳລັບທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023: ເພື່ອໃຫ້ສາມາດປະຕິບັດລາຍຮັບໃຫ້ໄດ້ຕາມແຜນ ແລະ ລື່ນແຜນ ກະຊວງການເງິນ ຈະສູ້ຊົນການຈັດຕັ້ງປະຕິບັດບັນດາມາດຕະການ ແລະ ຄາດໝາຍທີ່ໄດ້ກຳນົດ ຕາມມະຕິຂອງສະພາແຫ່ງຊາດ ໂດຍຈະໄດ້ສຸມໃສ່ບາງມາດຕະການ ແລະ ວຽກຈຸດສຸມຕົ້ນຕໍ ດັ່ງນີ້:

1. ດ້ານລາຍຮັບ:

(1) ສືບຕໍ່ຊຸກຍູ້, ຕິດຕາມ ຢ່າງໃກ້ຊິດ ກັບບັນດາແຂວງທີ່ເຮັດທົດລອງມອບຫົວໜ່ວຍທຸລະກິດ ໃຫ້ແຂວງຄຸ້ມຄອງເພື່ອເກັບລາຍຮັບໃຫ້ໄດ້ຕາມຄາດໝາຍ ແລະ ລື່ນຄາດໝາຍ ພ້ອມທັງສາມາດດຸນດ່ຽງງົບປະມານສ່ວນທີ່ເກີນດຸນໃຫ້ສູນກາງ. ພ້ອມກັນນັ້ນ, ຈະປະເມີນຄືນການເຮັດທົດລອງດັ່ງກ່າວ ເພື່ອຕີລາຄາດ້ານດີ ແລະ ຂໍ້ຄົງຄ້າງ ເປັນພື້ນຖານໃນການກຳນົດທິດທາງໃນຕໍ່ໜ້າ;

(2) ສຸມໃສ່ເກັບລາຍຮັບອາກອນມູນຄ່າເພີ່ມຕາມອັດຕາ 7% ໄປຄຽງຄູ່ກັບການປະເມີນຄືນ ເພື່ອສະເໜີສະພາແຫ່ງຊາດພິຈາລະນາຮັບຮອງເອົາອັດຕາໃໝ່ ເປັນ 10% ໃຫ້ສາມາດເລີ່ມຈັດຕັ້ງປະຕິບັດໃນປີ 2024;

ອ່ານຕໍ່ສະບັບໜ້າ

# ຮອງປະທານສະພາ ນວ ຢ້ຽມຢາມສູນສອບເສັງຈົບຊັ້ນ ມ.4



(ສພຊ) ທ່ານ ນາງ ລຳພອຍ ສີອັກຄະຈັນ ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ແລະ ທ່ານ ນາງ ເກດມະນີ ບັນດາສັກ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ພ້ອມດ້ວຍຄະນະ ໄດ້ຢ້ຽມຢາມສູນສອບເສັງ ປະຈຳສົກຮຽນ 2022-2023 ຢູ່ສູນສອບເສັງ ມສ. ສົມສະຫວາດ ເມືອງປາກງື່ມ ນະຄອນຫຼວງວຽງຈັນ ໃນຕອນເຊົ້າຂອງວັນທີ 16 ມິຖຸນາ 2023 ໂດຍການຕ້ອນຮັບຂອງທ່ານ ຄຳໝູນ ຕຽງທະລາດ ເຈົ້າເມືອງ ເມືອງປາກງື່ມ ແລະ ທ່ານ ບຸນທັນ ແສງມະນີ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ ພ້ອມດ້ວຍຫົວໜ້າຫ້ອງການສຶກສາເມືອງ, ຜູ້ອຳນວຍການໂຮງຮຽນ ມສ. ສົມສະຫວາດ ແລະ ຄູອາຈານຈຳນວນໜຶ່ງ.

ໃນການຢ້ຽມຢາມຄັ້ງນີ້, ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດກະກຽມໃນໄລຍະການສອບເສັງຈົບຊັ້ນມັດທະຍົມຕອນຕົ້ນ ປີທີ 4 ຂອງເມືອງປາກງື່ມ ນະຄອນຫຼວງວຽງຈັນ ໂດຍສະເພາະແມ່ນຢູ່ສູນສອບເສັງ ມສ. ສີສະຫວາດ ປະກອບມີ 12 ຫ້ອງສອບເສັງ, ມີ 3 ໂຮງຮຽນ ຄື: ມສ. ສົມສະຫວາດ, ມສ. ຊຽງແລ ແລະ ມຕ. ບ້ານພ້າວ, ມີນັກສອບເສັງທັງໝົດ 229 ຄົນ ຍິງ 128 ຄົນ, ມີຈຳນວນວິຊາສອບເສັງທັງໝົດ 6 ວິຊາ ຄື: ພາສາລາວ-ວັນນະຄະດີ, ວິທະຍາສາດສັງຄົມ, ວິທະຍາສາດທຳມະຊາດ, ສຶກສາພົນລະເມືອງ, ຄະນິດສາດ ແລະ ພາສາອັງກິດ.

ການຢ້ຽມຢາມດັ່ງກ່າວ, ຄະນະໄດ້ຮັບຟັງການລາຍງານກ່ຽວກັບຂໍ້ສະດວກ, ຂໍ້ຫຍຸ້ງຍາກ ໃນການປະຕິບັດວຽກງານການສອບເສັງ ເປັນຕົ້ນແມ່ນດ້ານງົບປະມານ, ສະພາບຫ້ອງສອບເສັງບໍ່ມີພັດລົມ, ບໍ່ມີປ່ອງຢ້ຽມ, ພາຫະນະໃນການຮັບໃຊ້, ອຸປະກອນຮັບໃຊ້ບໍ່ພຽງພໍ ແລະ ຄະນະໄດ້ມີຄຳເຫັນແລກປ່ຽນຕໍ່ບັນດາຂໍ້ຄົງຄ້າງຕ່າງໆ ພ້ອມທັງໄດ້ຮັບເອົາຄຳສະເໜີຂອງບັນດາຄູອາຈານ ເພື່ອນຳໄປສະເໜີຕໍ່ພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂ. ຫຼັງຈາກນັ້ນ, ຄະນະກໍໄດ້ຍ່າງຢ້ຽມຊົມແຕ່ລະຕຶກຂອງສູນສອບເສັງອີກດ້ວຍ.

ກ່ອນໜ້ານີ້, ໃນວັນທີ 5 ມິຖຸນາ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ຄຍປປ) ສະພາປະຊາຊົນນະຄອນຫຼວງວຽງຈັນ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໂດຍແບ່ງອອກເປັນ 2 ຈຸ ຄື: ຈຸທີ 1 ນຳໂດຍທ່ານ ນາງ ສົມພຽນ ວົງໄຊ ປະທານ ຄຍປປ ພ້ອມດ້ວຍຄະນະ ໄດ້ເຮັດວຽກຢູ່ສານປະຊາຊົນ, ໄອຍະການປະຊາຊົນ ເຂດ 1 ນະຄອນຫຼວງວຽງຈັນ ໄດ້ຮັບການຕ້ອນຮັບໂດຍທ່ານ ກົງເພັດ ລາດບຸນເຮືອງ ປະທານສານປະຊາຊົນ ເຂດ 1 ແລະ ທ່ານ ນາລີສອນ ສາຍສຸລິຍາ ຫົວໜ້າອົງການໄອຍະການປະຊາຊົນ ເຂດ 1 ແລະ ຈຸທີ 2 ນຳໂດຍທ່ານ ຄຳຜອງ ແສງສະຫວ່າງ ຮອງປະທານ ຄຍປປ ພ້ອມດ້ວຍຄະນະ ໄດ້ເຮັດວຽກຢູ່ອົງການໄອຍະການປະຊາຊົນ ເຂດ 2 ນະຄອນຫຼວງວຽງຈັນ ໃຫ້ການຕ້ອນຮັບໂດຍທ່ານ ບຸນທະວີ ສີແສນດີ ອົງການໄອຍະການປະຊາຊົນ ເຂດ 2 ນະຄອນຫຼວງວຽງຈັນ.

ໃນການເຮັດວຽກດັ່ງກ່າວ, ໄດ້ຮັບຟັງການລາຍງານການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງແຕ່ລະພາກສ່ວນ ເຊິ່ງໄລຍະຜ່ານມາໄດ້ຕັ້ງໜ້າຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດຕາມມະຕິກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ໂດຍແຕ່ລະພາກສ່ວນໄດ້ມີການປະສານສົມທົບເຊິ່ງກັນແລະກັນ ສຸມກຳລັງແຮງເຂົ້າໃສ່ວຽກງານວິຊາສະເພາະ ເພື່ອຍົກສູງຄຸນນະພາບໃນການດຳເນີນຄະດີຢູ່ສານ, ໄອຍະການຂັ້ນຕົ້ນ ໃຫ້ຮັບປະກັນຄວາມຖືກຕ້ອງຕາມຫຼັກການຂອງການດຳເນີນຄະດີ. ນອກນັ້ນ, ກອງປະຊຸມຍັງໄດ້ຮັບຟັງການລາຍສຳເລັດເລັດ ແລະ ຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດວຽກງານດ້ານອື່ນໆອີກ ແລະ ໃນໂອກາດດັ່ງກ່າວ ບັນດາທ່ານຜູ້ເຂົ້າຮ່ວມກໍໄດ້ມີຄຳເຫັນແລກປ່ຽນເຊິ່ງກັນແລະກັນ ເພື່ອຊອກຫາວິທີແກ້ໄຂບັນດາຂໍ້ຄົງຄ້າງໃນການປະຕິບັດວຽກງານຂອງອົງການໄອຍະການປະຊາຊົນ, ສານປະຊາຊົນ ເຂດ 1 ແລະ ອົງການໄອຍະການປະຊາຊົນ ເຂດ 2 ໃນໄລຍະຜ່ານມາ.

ໃນຕອນທ້າຍ, ປະທານກອງປະຊຸມຂອງແຕ່ລະຈຸ ກໍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄະນະນຳຂອງແຕ່ລະເຂດໃນໄລຍະຜ່ານມາ ທີ່ໄດ້ຕັ້ງໜ້າປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບສູງ ແລະ ເນັ້ນໃຫ້ເອົາໃຈໃສ່ປະຕິບັດບັນດາຄາດໝາຍ ແລະ ທິດທາງໃນຕໍ່ໜ້າທີ່ກຳນົດໄວ້ໃຫ້ໄດ້ຮັບຜົນສຳເລັດຕາມແຜນການທີ່ວາງໄວ້.



# ສາລະວັນ ຫາລືແກ້ໄຂຄຳສະເໜີຂອງສັງຄົມ

(ສພຊ) ກອງປະຊຸມຄົ້ນຄວ້າປຶກສາຫາລືແກ້ໄຂຄຳສະເໜີຂອງສັງຄົມຕິດພັນກັບການຕິດຕາມ-ກວດກາ ແລະ ບັນຫາທີ່ພົ້ນເດັ່ນການນຳເຂົ້າຜະລິດຕະພັນເບຍ ໂດຍການເປັນປະທານຂອງທ່ານ ສີເຮັງ ຫອມສົມບັດ ປະທານຄະນະສະມາຊິກສະພາແຫ່ງຊາດເຂດເລືອກຕັ້ງທີ 14 ທັງເປັນປະທານສະພາປະຊາຊົນແຂວງສາລະວັນ ໄດ້ຈັດຂຶ້ນໃນວັນທີ 7 ມິຖຸນາຜ່ານມາ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສາລະວັນ; ເຂົ້າຮ່ວມມີຮອງປະທານສະພາປະຊາຊົນແຂວງ, ບັນດາທ່ານຄະນະປະຈຳ, ຄະນະກຳມະການ, ມີຕາງໜ້າຈາກພະແນກການພະແນກອຸດສາຫະກຳ ແລະ ການຄ້າແຂວງ, ພະແນກການເງິນແຂວງ, ຮອງຫົວໜ້າຄະນະຄຸ້ມຄອງດ່ານສາກົນລະໄລ, ຫົວໜ້າພາສີປະຈຳດ່ານສາກົນລະໄລ ແລະ ທ່ານຫົວໜ້າຜູ້ອຳນວຍການຝ່າຍຂາຍ ຈາກບໍລິສັດ ເບຍລາວ ຈຳກັດ ພ້ອມດ້ວຍຄະນະ ເຂົ້າຮ່ວມໃນຄັ້ງນີ້.

ທ່ານ ດຳໜີ ສິງດວງຈັນ ຜູ້ອຳນວຍການຝ່າຍຂາຍປະຈຳ 4 ແຂວງພາກໃຕ້ ບໍລິສັດເບຍລາວ ຈຳກັດ ໄດ້ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ເຄື່ອນໄຫວກວດກາສິນຄ້າ ປະເພດເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ມີການລັກລອບນຳເຂົ້າມາຈຳໜ່າຍພາຍໃນແຂວງໂດຍບໍ່ຖືກຕ້ອງຕາມກົດໝາຍ ເປັນຕົ້ນປະເພດເບຍໄຊ່ງ່ອນ ແລະ ເບຍປະເພດອື່ນໆ ເຮັດໃຫ້ສົ່ງຜົນກະທົບຕໍ່ຜູ້ປະກອບການບໍລິສັດ ເບຍລາວ ຈຳກັດ ໂດຍສະເພາະດ້ານໂຄງສ້າງລາຄາ ແລະ ການຈັດຈຳໜ່າຍໃນທ້ອງຕະຫຼາດ; ການຄຸ້ມຄອງເກັບພາສີອາກອນນຳເຂົ້າຕາມໂກຕ້າທີ່ແຂວງອະນຸມັດຫຼືບໍ; ຫາວິທີລົງຕິດຕາມກວດກາຮ້ານຄ້າຂາຍຍົກ-ຂາຍຍ່ອຍ ຢູ່ພາຍໃນແຂວງ ກ່ອນຈະຈຳໜ່າຍຜະລິດຕະພັນເບຍທີ່ນຳເຂົ້າຈາກຕ່າງປະເທດຕ້ອງໄດ້ຮັບການອະນຸມັດ ແລະ ຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ ຈຶ່ງຈະສາມາດຈຳໜ່າຍໄດ້; ຈາກນັ້ນ, ຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດການຄຸ້ມຄອງການນຳເຂົ້າສິນຄ້າປະເພດເຄື່ອງດື່ມທີ່ມີທາດເຫຼົ້າທີ່ຜ່ານດ່ານສາກົນລະໄລຂອງແຂວງສາລະວັນ ພ້ອມທັງປະກອບຄຳຄິດເຫັນແລກປ່ຽນບາງບັນຫາ ແນໃສ່ເອກະພາບຮ່ວມກັນໃນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງການນຳເຂົ້າສິນຄ້າ, ການເສຍພາສີອາກອນສິນຄ້າໃຫ້ຖືກຕ້ອງຕາມກົດໝາຍ ພ້ອມທັງຊີ້ນຳໃຫ້ພາກສ່ວນທີ່ກ່ຽວຂ້ອງເປັນເຈົ້າການປະຕິບັດມາດຕະການຕາມກົດໝາຍຢ່າງເຂັ້ມງວດ, ເພື່ອເປັນການຊຸກຍູ້ ແລະ ສົ່ງເສີມຜະລິດຕະພັນພາຍໃນປະເທດ ເພື່ອສ້າງລາຍຮັບງົບປະມານໃຫ້ສູງຂຶ້ນ ແລະ ສູ້ຊົນໃຫ້ເກີນແຜນທີ່ກຳນົດໄວ້ຂອງລັດຖະບານວາງອອກ, ທັງເປັນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາເສດຖະກິດ-ການເງິນ ໃຫ້ດີຂຶ້ນເປັນກ້າວໆ.



ຕໍ່ມາໃນວັນທີ 14 ມິຖຸນານີ້, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສາລະວັນ ໄດ້ຈັດກອງປະຊຸມຕິດຕາມກວດກາການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ແລະ ຜົນການຈັດຕັ້ງປະຕິບັດບັນດາມະຕິທີ່ສະພາປະຊາຊົນແຂວງຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 4 ໂດຍການເຂົ້າຮ່ວມຂອງທ່ານ ນາງ ສູນໄຖ ໄຊຍະແສງ ຮອງປະທານສະພາປະຊາຊົນແຂວງ ແລະ ເປັນປະທານກອງປະຊຸມແມ່ນທ່ານ ນາງ ທອງໃບ ໄຊຍະສານ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງ, ມີບັນດາທ່ານຮອງປະທານຄະນະກຳມະການ, ຄະນະເລຂາທິການ, ບັນດາທ່ານຕາງໜ້າຈາກພະແນກການຂຶ້ນເຂດວັດທະນະທຳ-ສັງຄົມ ພ້ອມດ້ວຍພະນັກງານວິຊາການພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງລາຍງານຂໍ້ມູນຜົນການປະເມີນໄລຍະຕົ້ນ ຕາມດຳລັດ 348/ລບ ວ່າດ້ວຍມາດຕະການພົ້ນທຸກ ແລະ ມາດຕະການພັດທະນາ ປະຈຳປີ 2023 ຂອງແຂວງສາລະວັນ ຈາກພະແນກອຸດສາຫະກຳ ແລະ ການຄ້າແຂວງ; ຮັບຟັງການລາຍງານຜົນການຈັດຕັ້ງປະຕິບັດຄວາມຄືບໜ້າ 11 ຕົວຊີ້ບອກ, ລາຍງານຄວາມຄືບໜ້າຕົວຊີ້ວັດ 2 ຄາດໝາຍທີ່ຈັດຕັ້ງປະຕິບັດຍັງບໍ່ທັນສຳເລັດ, ການຈັດຕັ້ງປະຕິບັດວຽກງານປະກັນສຸຂະພາບ, ພ້ອມນັ້ນກໍຮັບຟັງການລາຍງານການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຄຸນນະພາບນ້ຳດື່ມ ແລະ ນ້ຳກ້ອນ ທີ່ຜະລິດຈາກໂຮງງານພາຍໃນແຂວງສາລະວັນ ຈາກພະແນກສາທາລະນະສຸກແຂວງ; ຮັບຟັງການລາຍງານການຈັດຕັ້ງປະຕິບັດບັນດາຄາດໝາຍຂອງວຽກງານການສຶກສາ ໂດຍສະເພາະຂໍ້ມູນການປະລະການຮຽນຂອງນັກຮຽນທີ່ຍັງເປັນບັນຫາພາຍໃນແຂວງທີ່ຈະຕ້ອງສືບຕໍ່ແກ້ໄຂ; ຮັບຟັງການລາຍງານຂໍ້ມູນການຄຸ້ມຄອງແຮງງານພາຍໃນແລະຕ່າງປະເທດ ຈາກພະແນກແຮງງານ ແລະ ສະຫວັດດີການ-ສັງຄົມແຂວງ.

ໂອກາດດັ່ງກ່າວ, ປະທານກອງປະຊຸມໄດ້ຕັ້ງຄຳຖາມເຈາະຈີ້ມລົງເລິກບາງບັນຫາໃຫ້ພາກສ່ວນຊີ້ແຈງອະທິບາຍເພີ່ມຕື່ມ ເຊິ່ງສະແດງໃຫ້ເຫັນຈຸດດີ ແລະ ຂໍ້ຄົງຄ້າງ ທີ່ຈະຕ້ອງໄດ້ສືບຕໍ່ຄົ້ນວ້າຫາທາງແກ້ໄຂໃນຕໍ່ໜ້າໃຫ້ສຳເລັດ.

**(ດີລຳພົນ ພົມມະຈັນ)**



# ສະຫຼຸບຕີລາຄາການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022




(ສພຊ) ຄະນະພັກຮາກຖານສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ຈັດກອງປະຊຸມສະຫຼຸບຕີລາຄາການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022 ໃນຕອນບ່າຍວັນທີ 13 ມິຖຸນາ 2023 ໂດຍການເປັນປະທານກອງປະຊຸມຮ່ວມມີສະຫາຍ ກົງແກ້ວ ມີວໍລະຈັກ ຮອງເລຂາພັກແຂວງ, ເລຂາຄະນະພັກຮາກຖານສະພາປະຊາຊົນແຂວງ, ຕາງໜ້າໃຫ້ແກ່ຄະນະພັກຂັ້ນເທິງ, ເຂົ້າຮ່ວມກອງປະຊຸມມີສະຫາຍຮອງເລຂາຄະນະພັກຮາກຖານສະພາປະຊາຊົນແຂວງ, ຜູ້ຕາງໜ້າຄະນະຈັດຕັ້ງແຂວງ, ຄະນະກວດກາພັກແຂວງ, ມີຄະນະພັກຮາກຖານ, ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ, ສະມາຊິກພັກພາຍໃນຮາກຖານພັກສະພາປະຊາຊົນແຂວງ, ຄະນະພັກຈາກອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ຫ້ອງວ່າການແຂວງ, ພະແນກແຜນການ ແລະ ການລົງທຶນແຂວງ, ພະແນກພະລັງງານ ແລະ ບໍ່ແຮ່ແຂວງເຂົ້າຮ່ວມຢ່າງພ້ອມພຽງ.

ໃນວາລະກອງປະຊຸມ, ສະຫາຍ ຄຳຜັນ ຄູນສະຫວັນ ຄະນະປະຈຳພັກແຂວງ ທັງເປັນຮອງເລຂາຄະນະພັກຮາກຖານສະພາປະຊາຊົນແຂວງ ໄດ້ຂຶ້ນຜ່ານບົດສະຫຼຸບສັງລວມຕີລາຄາການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022 ແລະ ທິດທາງແຜນການກໍ່ສ້າງໜ່ວຍພັກປອດໃສ,ເຂັ້ມແຂງ,ໜັກແໜ້ນ ປະຈຳປີ 2023 ຂອງ 4 ໜ່ວຍພັກ ໂດຍຍົກໃຫ້ເຫັນຜົນງານດ້ານດີທີ່ສາມາດຈັດຕັ້ງປະຕິບັດໄດ້ຫຼາຍດ້ານ ເຊິ່ງວຽກງານກໍ່ສ້າງພັກ ໄດ້ມີການກໍ່ສ້າງພັກໃນດ້ານຕ່າງໆ ຄື: ດ້ານການເມືອງ-ແນວຄິດ, ດ້ານການຈັດຕັ້ງ, ດ້ານແບບແຜນການນຳພາ ແລະ ວິທີເຮັດວຽກ.

ຕໍ່ມານັ້ນມີຕາງໜ້າຈາກຄະນະຈັດຕັ້ງແຂວງ ໄດ້ຜ່ານມະຕິຕົກລົງຂອງຄະນະປະຈຳພັກແຂວງ ສະບັບເລກທີ 301, 302, 303, 304 ວ່າດ້ວຍການມອບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ, ໃຫ້ກັບ 4 ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານສະພາປະຊາຊົນແຂວງ ຄື: ໜ່ວຍພັກຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ, ໜ່ວຍພັກຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ, ໜ່ວຍພັກຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ແລະ ໜ່ວຍພັກຄະນະເລຂາທິການສະພາປະຊາຊົນແຂວງ ໂດຍໃຫ້ກຽດມອບຈາກ ທ່ານ ກົງແກ້ວ ມີວໍລະຈັກ ຮອງເລຂາພັກແຂວງ ຕາງໜ້າໃຫ້ຄະນະພັກຂັ້ນເທິງ ພ້ອມທັງໄດ້ໂອ້ລົມ ເພື່ອເປັນທິດເຍືອງທາງໃຫ້ຮາກຖານພັກ, ບັນດາໜ່ວຍພັກ ແລະ ສະມາຊິກພັກ ເພື່ອເອົາໃຈໃສ່ ແລະ ປະຕິບັດກົດລະບຽບຂອງພັກ, ເຮັດໜ້າທີ່ຄົ້ນຄວ້າຕາມຫຼັກວິຊາການ ເພື່ອຕອບສະໜອງໃຫ້ການປະຕິບັດ 3 ພາລະບົດບາດຂອງສະພາແຫ່ງຊາດ-ສະພາປະຊາຊົນແຂວງ ໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ນັບມື້ດີຂຶ້ນເລື່ອຍໆ.

**(ສະຫວັດດີ ສີບຸນເຮືອງ)**

# ຕິດຕາມ, ຊຸກຍູ້ໂຮງງານປຸງແຕ່ງນ້ຳມັນເຊື້ອໄຟ ຍອດງື່ມພາວເວີ ມະຫາຊົນ

(ສພຊ) ເພື່ອເປັນການລົງຕິດຕາມ, ກວດກາ, ຊຸກຍູ້ການເຄື່ອນໄຫວຂອງໂຮງງານປຸງແຕ່ງນ້ຳມັນເຊື້ອໄຟ ຍອດງື່ມພາວເວີ ມະຫາຊົນ ເພື່ອເປັນຂໍ້ມູນໃຫ້ແກ່ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ເຂົ້າຮ່ວມກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX. ໃນວັນທີ 9 ມິຖຸນາ 2023 ຄະນະທີມງານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 9 ແລະ ສະພາປະຊາຊົນແຂວງ ໄດ້ສົມທົບກັບພະແນກການທີ່ກ່ຽວຂ້ອງຂອງແຂວງ ໄດ້ເຄື່ອນໄຫວຕິດຕາມ, ຊຸກຍູ້ການເຄື່ອນໄຫວຂອງໂຮງງານປຸງແຕ່ງນ້ຳມັນເຊື້ອໄຟຍອດງື່ມພາວເວີ ມະຫາຊົນ ນຳໂດຍທ່ານ ບຸນໂຮມ ເທດທານີ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 9, ປະທານສະພາປະຊາຊົນແຂວງຊຽງຂວາງ, ມີທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 9, ສະມາຊິກສະພາປະຊາຊົນແຂວງ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ກົມຄຸ້ມຄອງມາດຕະຖານ ກະຊວງອຸດສະຫະກຳ ແລະ ການຄ້າແຂວງ, ທີມງານຈາກສະພາປະຊາຊົນແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ.



ໃນໂອກາດດັ່ງກ່າວ, ທ່ານ ສົມຫວັງ ຄູຣູລັດ ປະທານບໍລິສັດ ປຸງແຕ່ງນ້ຳມັນເຊື້ອໄຟ ຍອດງື່ມພາວເວີ ມະຫາຊົນ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ໂຮງງານປຸງແຕ່ງນ້ຳມັນເຊື້ອໄຟຍອດງື່ມ ພາວເວີຈຳກັດ ສ້າງຕັ້ງຂຶ້ນໃນວັນທີ 1 ພະຈິກ 2021 ດ້ວຍທຶນຈົດທະບຽນ 100 ຕື້ກີບໃນຮູບແບບບໍລິສັດຈຳກັດ ແລະ ໄດ້ປ່ຽນມາເປັນບໍລິສັດມະຫາຊົນພ້ອມດ້ວຍການເພີ່ມທຶນຈົດທະບຽນເປັນ 150 ຕື້ກີບ ໃນວັນທີ 10 ມັງກອນ 2023 ດຳເນີນທຸລະກິດກ່ຽວກັບການປຸງແຕ່ງນ້ຳມັນເຊື້ອໄຟປະເພດນ້ຳມັນກາຊວນ ແລະ ໄດ້ເພີ່ມສາຍການຜະລິດປຸງແຕ່ງນ້ຳມັນແອັດຊັງ ເພື່ອຕອບສະໜອງຜົນການຜະລິດໃຫ້ທົ່ວສັງຄົມ, ເຊິ່ງໄດ້ດຳເນີນທຸລະກິດກ່ຽວກັບການປຸງແຕ່ງນ້ຳມັນເຊື້ອໄຟປະເພດນ້ຳມັນກາຊວນ ແລະ ນ້ຳມັນແອັດຊັງເປັນຜະລິດຕະພັນທີ່ມີຄຸນນະພາບ ຕາມມາດຕະຖານແຫ່ງຊາດ ມີມູນຄ່າການລົງທຶນທັງໝົດ 107,56 ຕື້ກີບ, ທຳການຜະລິດເບື້ອງຕົ້ນ 10 ລ້ານລິດຕໍ່ເດືອນ ດ້ວຍເວລາການເຮັດວຽກຂອງເຄື່ອງຈັກ 8 ຊົ່ວໂມງຕໍ່ມື້, ມີລົດຂົນສົ່ງນ້ຳມັນເຊື້ອໄຟເປັນຂອງຕົວເອງຈຳນວນ 15 ຄັນ, ມູນຄ່າທັງໝົດ 15,78 ຕື້ກີບ, ໃນທິດທາງຕໍ່ໜ້າ ບໍລິສັດຍອດງື່ມພາວເວີ ມະຫາຊົນ ໄດ້ມີໂຄງການຮ່ວມທຸລະກິດລະຫວ່າງລັດວິສາຫະກິດນ້ຳມັນເຊື້ອໄຟລາວ ກັບບໍລິສັດຍອດງື່ມພາວເວີມະຫາຊົນ ເຂົ້າມາລົງທຶນ ແລະ ບໍລິຫານກິດຈະການຈຳໜ່າຍນ້ຳມັນເຊື້ອໄຟພາຍໃນແຂວງຊຽງຂວາງ.

ໃນຕອນທ້າຍ, ທ່ານ ບຸນໂຮມ ເທດທານີ ໄດ້ມີຄຳເຫັນຊີ້ນຳຕໍ່ໂຮງງານດັ່ງກ່າວ ສະແດງຄວາມຍ້ອງຍໍຊົມເຊີຍຕະຫຼອດໄລຍະຜ່ານມາໂຮງງານທີ່ໄດ້ມີຄວາມພະຍາຍາມໃນການທຸ່ມເທເຫື່ອແຮງສະຕິປັນຍາທຶນຮອນອັນມະຫາສານເຂົ້າໃນການສ້າງຕັ້ງໂຮງງານ ແລະ ທ່ານໄດ້ມີຄຳເຫັນຊີ້ນຳຕໍ່ໂຮງງານດັ່ງກ່າວໃຫ້ໄດ້ສືບຕໍ່ແກ້ໄຂຫຼາຍຢ່າງ ໂດຍສະເພາະແມ່ນສຸມໃສ່ກໍ່ສ້າງພື້ນຖານໂຄງລ່າງໃຫ້ດີຂຶ້ນກວ່າເກົ່າ, ສືບຕໍ່ນຳເອົານ້ຳ ມັນທີ່ດີມາປຸງໃຫ້ມີຄຸນນະພາບສາມາດສະໜອງໃຫ້ຕະຫຼາດຢ່າງພຽງພໍ.

**(ນາງ ສຸກສະຫວັນ ອິນທະແສງ)**

# ສະພາປະຊາຊົນແຂວງອັດຕະປື ຕິດຕາມກວດກາລັດຖະທຳມະນູນ ແລະ ກົດໝາຍ

(ສພຊ) ໃນລະຫວ່າງວັນທີ 12-13 ມິຖຸນາ 2023 ທີ່ຫ້ອງປະຊຸມຫ້ອງວ່າການປົກຄອງເມືອງສະໜາມໄຊ ແລະ ເມືອງໄຊເສດຖາ ໄດ້ຈັດກອງປະຊຸມຕິດຕາມກວດກາວຽກງານ 6 ເດືອນຕົ້ນປີ 2023 ໃນຂົງເຂດຍຸຕິທຳ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຍາເສດຕິດຢູ່ຂັ້ນເມືອງ ໂດຍການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະທີມງານຈາກສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ, ຜູ້ຕາງໜ້າຈາກອົງການກວດກາລັດເມືອງ, ຫ້ອງການຍຸຕິທຳເມືອງ, ກອງບັນຊາການປ້ອງກັນຊາດ-ປ້ອງກັນຄວາມສະຫງົບເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງຈຳນວນໜຶ່ງເຂົ້າຮ່ວມ.



ກອງປະຊຸມ, ໄດ້ຮັບຟັງການລາຍງານຂໍ້ຫຍຸ້ງຍາກ, ມາດຕະການ ແລະ ສິ່ງທ້າທາຍ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ໃຊ້ຢ່າງເດັດຂາດທີ່ມີຫຼັກຊັບຄ້ຳປະກັນ, ການປະສານສົບທົບລະຫວ່າງສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ການປະສານສົມທົບໃນການດຳການແກ້ໄຂຄຳສະເໜີຂອງປະຊາຊົນ, ການປະຕິບັດການປັບປຸງກອງຫຼອນຂັ້ນບ້ານ, ການຕິດຕາມກວດກາຄົນເຂົ້າ-ອອກເມືອງ, ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສດຕິດຢູ່ຂັ້ນເມືອງ ຈາກນັ້ນ, ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ໄດ້ມີຄວາມຄິດຄວາມເຫັນແລກປ່ຽນຢ່າງກົງໄປກົງມາ ແລະ ເລິກເຊິ່ງ. ທັງນີ້, ເພື່ອເປັນການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນຂົງເຂດວຽກງານຍຸຕິທຳ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະຜ່ານມາ ແລະ ບັນຫາປາກົດການຫຍໍ້ທໍ້ຕ່າງໆ ແລະ ທາງສຽງຂອງສັງຄົມທີ່ເກີດຂຶ້ນຢູ່ຂັ້ນເມືອງ ເພື່ອເກັບກຳຂໍ້ມູນມາວິເຄາະວິໄຈ ໃຫ້ເຫັນໄດ້ບັນຫາ, ສາເຫດ ແລະ ວິທີທາງແກ້ໄຂ ເພື່ອເປັນຂໍ້ມູນພື້ນຖານໃນຕໍ່ໜ້າ.

ຕອນທ້າຍ, ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ຍ້ອງຍໍຊົມເຊີຍໃນການຈັດຕັ້ງປະບັດວຽກງານຂອງບັນດາຂະແໜງ ໃນໄລຍະຜ່ານມາ ເຊິ່ງເຫັນໄດ້ມີຜົນສຳເລັດຫຼາຍດ້ານ, ແຕ່ຍັງມີຂໍ້ຄົງຄ້າງ ແລະ ສິ່ງທ້າທາຍຫຼາຍປະການທີ່ຕ້ອງໄດ້ເອົາໃຈໃສ່ ເປັນຕົ້ນແມ່ນສືບຕໍ່ໃຫ້ອົງການກວດກາລັດ ສົມທົບກັບສະພາປະຊາຊົນແຂວງ ເອົາໃຈໃສ່ຕິດຕາມກວດກາ ແລະ ເກັບກຳຂໍ້ມູນໃນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳຂອງອົງການບໍລິຫານ ຢ່າງເຂັ້ມງວດ ແລະ ສືບຕໍ່ເອົາໃຈໃສ່ຄຸ້ມຄອງ, ເກັບກຳສະຖິຕິຄົນເຂົ້າ-ອອກເມືອງຢ່າງຈະແຈ້ງ, ຕິດຕາມປາກົດການຫຍໍ້ທໍ້ໃນຖັນແຖວພະນັກງານ, ປັບປຸງກອງຫຼອນຂັ້ນບ້ານໃຫ້ມີຄວາມໜັກແໜ້ນເຂັ້ມແຂງ, ສືບຕໍ່ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານງານຄຽງຄູ່ກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ເພື່ອສ້າງຄວາມຮັບຮູ້ໃຫ້ສັງຄົມ ດ້ວຍການສຶກສາອົບຮົມ, ໂຄສະນາເຜີຍແຜ່ລະບຽບກົດໝາຍ, ຜົນຮ້າຍ ແລະ ຄວາມອັນຕະລາຍຂອງຢາເສບຕິດຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງດ້ວຍຫລາຍຮູບແບບ, ຫຼາຍວິທີ, ເອົາໃຈໃສ່ຊຸກຍູ້, ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງ ໃຫ້ສະຖາບັນຄອບຄົວ ແລະ ຊຸມຊົນໃນການຕ້ານ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດໃຫ້ແຂງແຮງ, ກຳນົດລະບອບລະບຽບການ, ກົນໄກ ແລະ ການຈັດຕັ້ງທີ່ເຂັ້ມແຂງ.

ພ້ອມນັ້ນ, ໃນວັນທີ 14 ມິຖຸນາ, ທ່ານ ນາງ ພອນມະນີ ຂຽນໄຊຍະວົງ ຮອງປະທານສະພາປະຊາຊົນແຂວງ ອັດຕະປື ພ້ອມດ້ວຍຄະນະ ກໍໄດ້ເຄື່ອນໄຫວຕິດຕາມ ແລະ ເກັບກຳຂໍ້ມູນ ຢູ່ບ້ານປາກບໍ່ ເມືອງສະໜາມໄຊ; ເຂົ້າຮ່ວມມີການປົກຄອງ 4 ບ້ານຄື: ບ້ານປາກບໍ່,

ອ່ານຕໍ່ໜ້າ 7

# ເຊກອງ ເອົາໃຈໃສ່ຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ

(ສພຊ) ສະພາປະຊາຊົນແຂວງເຊກອງ ໄດ້ຈັດກອງປະຊຸມເພື່ອຮັບຟັງການລາຍງານຜົນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ຄື: ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດຂອງແຂວງ ໂດຍການເປັນປະທານຂອງທ່ານ ດົງເພັດ ພະຍົນ ປະທານສະພາປະຊາຊົນແຂວງ, ມີທ່ານ ປອ. ແພງສີ ສີລາວີ ຮອງປະທານສະພາປະຊາຊົນແຂວງ, ບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ກຳມະການພັກແຂວງ, ຫົວໜ້າ-ຮອງຫົວໜ້າກອງບັນຊາການ ປກຊ-ປກສ ແຂວງ, ຫົວໜ້າ-ຮອງຫົວໜ້າພະແນກ, ອົງການທຽບເທົ່າ, ບໍລິສັດ, ລັດວິສາຫະກິດ ພ້ອມດ້ວຍວິຊາການຊ່ວຍວຽກຄະນະຮັບຜິດຊອບຊຸກຍູ້, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດຂັ້ນແຂວງເຂົ້າຮ່ວມ.

ທ່ານ ສຸກັນ ວໍລະປັນໄຊ ຮອງຫົວໜ້າພະແນກການເງິນແຂວງເຊກອງ ໄດ້ລາຍງານກ່ຽວກັບສະພາບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຂອງແຂວງ ເລີ່ມແຕ່ເດືອນ 8 2021-ເດືອນ 6 2023 ຕະຫຼອດໄລຍະຊຸມປີທີ່ຜ່ານມາ ອົງການປົກຄອງແຂວງ, ສະພາປະຊາຊົນແຂວງ, ພະແນກການອ້ອມຂ້າງແຂວງ, ອົງການປົກຄອງເມືອງ, ໄດ້ເອົາໃຈໃສ່ເປັນບູລິມະສິດພິເສດ, ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຂອງແຂວງ, ຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມ ໄລຍະ 5 ປີ (2021-2025) ແລະ ແຜນງົບປະມານແຫ່ງລັດ (2021-2023) ແລະ ການແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ ເຊິ່ງສະແດງໃຫ້ເຫັນຢ່າງຈະແຈ້ງໃນແຕ່ລະປີ ແຂວງເຊກອງ ຂາດດຸ່ນງົບປະມານ 80-90 % ຂອງແຜນການປີ. ມາຮອດປີ 2020 ແຂວງສາມາດຈັດຕັ້ງປະຕິບັດລາຍຮັບງົບປະມານເກີນແຜນ, ປີ 2021 ປະຕິບັດໄດ້ 104,53 ຕື້ກີບ, ເທົ່າ 129 % ຂອງແຜນດັດແກ້ (ປະຕິບັດໄດ້ເກີນແຜນ), ໃນປີ 2022 ປະຕິບັດໄດ້ 157,43 ຕື້ກີບ ທຽບໃສ່ແຜນດັດແກ້ໃນປີ ປະຕິບັດໄດ້ 132,46% (ປະຕິບັດໄດ້ເກີນແຜນ), ທຽບໃສ່ປີ 2021 ສາມາດຈັດເກັບລາຍຮັບໄດ້ເພີ່ມຂຶ້ນ 50% ເປັນເງິນ 52,9 ຕື້ກີບ, ໄລຍະ 4 ເດືອນປີ 2023 ປະຕິບັດໄດ້ 35,80 ຕື້ກີບ ທຽບໃສ່ແຜນປີ ປະຕິບັດໄດ້ 15,26%, ທຽບໃສ່ໄລຍະດຽວກັນຂອງປີ 2022 ສາມາດຈັດເກັບລາຍຮັບໄດ້ເພີ່ມຂຶ້ນ 39% ເປັນເງິນ 10,2 ຕື້ກີບ ແລະ ໃນຄາດຄະເນໃນໄລຍະ 6 ເດືອນຕົ້ນປີ 2023 ຈະສາມາດປະຕິບັດໄດ້ 80,90 ຕື້ກີບ, ເທົ່າ 35% ຂອງແຜນການປີ ການເຕີບໂຕທາງດ້ານ



ເສດຖະກິດລວມຂອງແຂວງມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ການຈັດຕັ້ງປະຕິບັດລາຍຮັບງົບປະມານແຫ່ງລັດແຕ່ລະປີ ກໍ່ມີລັກສະນະເພີ່ມຂຶ້ນຢ່າງຕໍ່ເນື່ອງ, ຈາກແຂວງຂາດດຸນໃນແຕ່ລະປີ ກາຍເປັນແຂວງ ກຸ້ມດຸນດ້ານລາຍຮັບ-ລາຍຈ່າຍງົບປະມານເທື່ອລະກ້າວ.

ຜົນສຳເລັດດັ່ງກ່າວແມ່ນຍ້ອນການນຳພາ-ຊີ້ນຳໂດຍກົງຂອງອົງການປົກຄອງແຂວງ, ພະແນກການອ້ອມຂ້າງແຂວງ ແລະ ການປະກອບສ່ວນອັນໃຫຍ່ຫຼວງ, ຂອງການຈັດຕັ້ງພັກ-ລັດ. ບຸກຄົນ, ນິຕິບຸກຄົນ, ລັດວິສາຫະກິດ, ລົງທຶນພາຍໃນ ແລະ ຕ່າງປະເທດເຄື່ອນໄຫວດຳເນີນທຸລະກິດຢູ່ແຂວງເຊກອງ. ປະຕິບັດພັນທະງົບປະມານຖືກຕ້ອງຕາມລະບຽບກົດໝາຍ.

ທ່ານ ພັອ. ຄຳບານ ພົມມະນີວົງ ຫົວໜ້າກອງບັນຊາການ ປກສ ແຂວງເຊກອງ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດຂອງແຂວງວ່າ: ຕະຫຼອດໄລຍະທີ່ຜ່ານມາ ຄະນະພັກ-ຄະນະບັນຊາກອງບັນຊາການ ປກສ ແຂວງເຊກອງ ໄດ້ສຸມໃສ່ການໂຄສະນາເຜີຍແຜ່ບັນດານິຕິກຳຕ່າງໆ ເປັນຕົ້ນ: ແມ່ນການປະຕິບັດໂຄງການແກ້ໄຂບັນຫາຢາເສບຕິດຢູ່ໃນທົ່ວສັງຄົມຢ່າງຕໍ່ເນື່ອງ ເປັນຕົ້ນແມ່ນໄດ້ຊີ້ນຳກຳລັງເຈົ້າໜ້າທີ່ວິຊາສະເພາະເປັນເຈົ້າການນຳໃຊ້ກົດໝາຍຢ່າງເຂັ້ມງວດ, ການດຳເນີນຄະດີສາມາດຮັບປະກັນຄວາມລະອຽດຊັດເຈນ ແລະ ຮັດກຸມ, ເປັນເຈົ້າການສະຫຼຸບສິ່ງສຳນວນຄະດີໃຫ້ອົງການໄອຍະການປະຊາຊົນແຂວງ ເພື່ອເຮັດໃຫ້ຜູ້ກະທຳຜິດໄດ້ຮັບການລົງໂທດຕາມລະບຽບການ ແລະ ໄດ້ສ້າງຍຸດທະສາດຂອງກອງບັນຊາການ ປກສ ແຂວງ ແລະ 4 ຕົວເມືອງ ວ່າດ້ວຍການກວດກາ, ຄວບຄຸມ, ສະກັດກັ້ນແລະຕ້ານຢາເສບຕິດຢູ່ແຂວງ ເຊກອງແຕ່ປີ 2021-2023 ຈຳນວນ 5 ຊຸດ; ສ້າງແຜນດຳເນີນງານຂອງ ປກສ ແຂວງ ແລະ 4 ຕົວເມືອງ ວ່າດ້ວຍການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດວ່າ 2021-2023 ຈຳນວນ 5 ຊຸດ ແລະ ສ້າງກົດລະບຽບບ້ານກ່ຽວກັບການແກ້ໄຂບັນຫາຢາເສບຕິດໂດຍມອບໃຫ້ກອງບັນຊາການ ປກສ ເມືອງ 4 ຕົວເມືອງ ນຳໄປເຜີຍແຜ່ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດຢູ່ບັນດາຮາກຖານບ້ານ ເລີ່ມແຕ່ປີ 2022 ເປັນຕົ້ນມາ ແລະ ສ້າງແຈ້ງການແນະນຳຕ່າງໆຕາມຄຳແນະນຳຂອງທ່ານເຈົ້າແຂວງ ກ່ຽວກັບການຕ້ານ, ສະກັດກັ້ນ ແລະ ແກ້ຂັນບັນຫາຢາເສບຕິດຢູ່ແຂວງ ເຊກອງ ນັບແຕ່ປີ 2021-2023.

ນອກນັ້ນ, ຍັງໄດ້ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງອົງການສືບສວນ-ສອບສວນຢາເສບຕິດແຕ່ລະຂັ້ນ ໃນນັ້ນ, ໄດ້ປັບປຸງກຳລັງ ປກສ ແຂວງ, ເມືອງ ແລະ ກຸ່ມບ້ານ ນັບແຕ່ຂັ້ນພະແນກ, ໜ່ວຍງານຮອດພະນັກງານ-ວິຊາການ; ເປັນເຈົ້າການປະສານສົມທົບກັບບັນດາກົມກອງ ພະແນກການຢ່າງກົມກຽວຕໍ່ເນື່ອງ ໃນການແກ້ໄຂບັນຫາຢາເສບຕິດຕາມຂະບວນການຍຸຕິທຳ ເປັນຕົ້ນ: ແມ່ນອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ.

ພ້ອມນັ້ນ, ຍັງໄດ້ນຳພາ-ຊີ້ນຳກຳລັງເຈົ້າໜ້າທີ່ວິຊາສະເພາະ ໃນການແກ້ໄຂມ້າງຄະດີຢາເສບຕິດ ເອົາໃຈໃສ່ປະຕິບັດຕາມຫຼັກການວິຊາສະເພາະ, ກົດໝາຍ ໂດຍຮັບປະກັນ 3 ຫຼັກການໃຫຍ່ຄື: ຄວາມເດັດຂາດ, ໂປ່ງໃສ ແລະ ຄວາມເປັນມືອາຊີບ ໂດຍສາມາດເລີກຮື້ມ້າງຄະດີຢາເສບຕິດໄດ້ທັງໝົດ 115 ເລື່ອງ, ຈັບຜູ້ຕ້ອງຫາໄດ້ 117 ຄົນ ຍິງ 9 ຄົນ, ຢຶດຂອງກາງປະເພດຢາເສບຕິດໄດ້ທັງໝົດ 90.228 ເມັດ, ພາຫະນະລົດໃຫຍ່ 1 ຄັນ, ລົດຈັກ 31 ຄັນ, ໂທລະສັບ 106 ໜ່ວຍ, ປືນດັດແປງ 4 ກະບອກ ພ້ອມດ້ວຍລູກປືນປະເພດຕ່າງໆ 74 ລູກ, ລູກໂບກຜາລະເບີດ 4 ອັນ, ລູກແກັບ 300 ລູກ, ອຸປະກອນຄວບຄຸມລະເບີດ 2 ອັນ, ເງິນກີບ 27 ລ້ານກວ່າກີບ, ເງິນໂດລາ 5 ໂດລາ ແລະ ເງິນດົ້ງ 3000 ດົ້ງ; ໄດ້ນຳສົ່ງຜູ້ເສບ ແລະ ມື້ວສຸມຢາເສບຕິດຂັ້ນຮຸນແຮງ ໄປປິ່ນປົວບຳບັດຕາມສູນຕ່າງໆ ຈຳນວນ 22 ຄົນ ແລະ ໄດ້ສຶກສາອົບຮົມຜູ້ເສບ, ມື້ວສຸມຢາເສບຕິດ ພ້ອມທັງສ້າງບົດບັນທຶກກ່າວເຕືອນຈຳນວນ 1.675 ຄົນ ຍິງ 51 ຄົນ ແລະ ໄດ້ສະຫຼຸບສຳນວນຄະດີສົ່ງໃຫ້ອົງການໄອຍະການປະຊາຊົນແຂວງສັ່ງຟ້ອງໃຫ້ສານຕັດສິນ ຈຳນວນ 179 ເລື່ອງ, ມີຕ້ອງຫາ 179 ເລື່ອງ ຍິງ 6 ຄົນ.

**(ນາລີວັນ)**



## ສະພາປະຊາຊົນ...

ບ້ານໂພນສະອາດ, ບ້ານໜອງແຂ້ ແລະ ບ້ານດອນ ຕະຫຼອດຮອດພໍ່ແມ່ປະຊາຊົນເຂົ້າຮ່ວມ ເພື່ອຮັບປະກັນການຈັດຕັ້ງປະຕິບັດການຊົດເຊີຍ ໃນລາຍການທີ 6 (ໂຄງສ້າງ ແລະ ສິ່ງປຸກສ້າງ, ຜົນຜະລິດ ແລະ ວັດຖຸມີຄ່າ) ຈາກຜົນກະທົບຂອງເຂື່ອນໄຟຟ້າເຊປຽນ-ເຊນ້ຳນ້ອຍ ໃນປີ 2018 ທີ່ຜ່ານມາ, ເກັບກຳຂໍ້ມູນດ້ານຂໍ້ຄົງຄ້າງ, ສາເຫດ, ຄວາມເໝາະສົມ ແລະ ສອດຄ່ອງກັບຄວາມເປັນຈິງ, ມີຄວາມເອກະພາບດ້ານຂໍ້ມູນ ແລະ ສົມເຫດສົມຜົນ ໃນການຊົດເຊີຍ ເພື່ອເປັນຂໍ້ມູນພື້ນຖານນຳໄປຄົ້ນຄວ້າ, ສົມທຽບ ແລະ ວິເຄາະວິໄຈ ຢ່າງເລິກເຊິ່ງ ໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX.

**(ວິມັດ)**



# ປະກາດແຕ່ງຕັ້ງຮອງຫົວໜ້າຂະແໜງ ສະພາປະຊາຊົນແຂວງວຽງຈັນ




(ສພຊ) ສະພາປະຊາຊົນແຂວງວຽງຈັນ ໄດ້ຈັດພິທີປະກາດແຕ່ງຕັ້ງຮອງຫົວໜ້າຂະແໜງ ໂດຍໄດ້ຕົກລົງແຕ່ງຕັ້ງທ່ານ ນາງ ພູວຽງ ວົງພະຈັນ ເປັນຮອງຫົວໜ້າຂະແໜງຈັດຕັ້ງ, ບໍລິຫານ-ການເງິນ, ແຕ່ງຕັ້ງທ່ານ ຕົ້ນຕະການ ທອງສະຫງວນ ເປັນຮອງຂະແໜງຄົ້ນຄວ້າ-ສັງລວມ, ຂໍ້ມູນ ແລະ ຂ່າວສານ, ແຕ່ງຕັ້ງທ່ານ ນາງ ເພັດສະໜອນ ສຸວັນນະສານ ເປັນຮອງຫົວໜ້າຂະແໜງວຽກງານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ແຕ່ງຕັ້ງທ່ານ ພັກສະດີ ໄຊປັນຍາ ເປັນຮອງຫົວໜ້າຂະແໜງເສດຖະກິດ.

ເປັນປະທານໂດຍທ່ານ ບຸນສອນ ເພັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ; ເຂົ້າຮ່ວມມີຮອງປະທານສະພາປະຊາຊົນແຂວງ, ຄະນະກຳມາການ, ຮອງເລຂາທິການ, ພະແນກການອ້ອມຂ້າງແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ, ສະມາຊິກພັກ, ພະນັກງານພາຍໃນສະພາປະຊາຊົນແຂວງວຽງຈັນ.

ໂອກາດດັ່ງກ່າວ, ທ່ານ ບຸນສອນ ເພັດລາວັນ ໄດ້ມີຄຳເຫັນໂອ້ລົມຕໍ່ຜູ້ທີ່ໄດ້ຮັບການແຕ່ງຕັ້ງຮັບໜ້າທີ່ໃໝ່ ໃຫ້ເອົາໃຈໃສ່ຝຶກຝົນຫຼໍ່ຫຼອມຕົນເອງ ຍົກສູງຄວາມຮູ້ຄວາມສາມາດ ໃຫ້ທຽບທັນກັບຄວາມຮຽກຮ້ອງຕ້ອງການຂອງໜ້າວຽກ ເພື່ອໃຫ້ມີແບບແຜນວິທີເຮັດວຽກຢ່າງລະອຽດຈະແຈ້ງຕໍ່ກັບການປະຕິບັດວຽກງານວິຊາສະເພາະທີ່ພັກ ແລະ ລັດ ກໍຄືປະຊາຊົນມອບໝາຍໃຫ້ມີຜົນສຳເລັດຕາມລະດັບຄາດໝາຍ.

**(ນາງ ບຸລາຕີ ແສນທະວົງ)**



## ເຝົ້າໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ຫັນຈາກພະລັງງານດັ້ງເດີມ ສູ່ພະລັງງານສະອາດ

ໃນບົດປະຈຳອາທິດຜ່ານມາ, ຜູ້ຂຽນໄດ້ເວົ້າກ່ຽວກັບບັນຫາຂີ້ເຫຍື້ອປະເພດຢາງ ແລະ ວິທີທີ່ບາງປະເທດນຳໃຊ້ເພື່ອແກ້ໄຂ, ເລື່ອງ ສສ ຫວຽດນາມ ວາງເປົ້າໝາຍສົ່ງເສີມສັງຄົມສີຂຽວໃນຊຸມຊົນທົ່ວປະເທດ ເຊິ່ງໝາຍເຖິງການປຸກລະດົມກັນປູກຕົ້ນໄມ້ໃຫ້ໄດ້ 1 ຕື້ຕົ້ນ ນັບແຕ່ປີ 2021 ຫາປີ 2025. ສຳລັບບົດນີ້ ຜູ້ຂຽນໄດ້ຮັບໂຮມມາສະເໜີບາງບົດຮຽນ ກ່ຽວກັບການນຳໃຊ້ພະລັງງານສະອາດເພື່ອແລ່ນລົດ ແນໃສ່ຫຼຸດຜ່ອນການປ່ອຍກາກບອນດີໂອຊິດ ເຊັ່ນ ຢູ່ **ປະເທດອຽກລັງ** (ປະເທດເກາະໃກ້ໆປະເທດອັງກິດ) ທາງການໄດ້ວາງເປົ້າໝາຍໄວ້ຢ່າງຈະແຈ້ງວ່າ ພາຍໃນປີ 2030 ຈະຫ້າມການຊື້-ຂາຍລົດທີ່ໃຊ້ພະລັງງານດັ້ງເດີມ ຄືໃນປັດຈຸບັນນີ້ (ແອັດຊັງ, ກາຊວນ...). ເປົ້າໝາຍດັ່ງກ່າວ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາບອາກາດ ສະບັບປັບປຸງໃນປີ 2019. ສ່ວນລົດທີ່ແລ່ນດ້ວຍນ້ຳມັນແອັດຊັງ ແລະ ກາຊວນ ທີ່ມີຢູ່ແລ້ວນັ້ນ ຈະອະນຸຍາດໃຫ້ນຳໃຊ້ໄດ້ຮອດປີ 2045. ປະເທດອຽກລັງໄດ້ວາງກຳນົດໝາຍຫຼຸດການປ່ອຍກາກບອນດີໂອຊິດ ໃຫ້ເປັນ (0) ພາຍໃນປີ 2050. ສ່ວນ **ປະເທດຝຣັ່ງ** ແລະ **ອັງກິດ**ນັ້ນ ຕ່າງກໍໄດ້ກຳນົດເອົາປີ 2040 ເປັນປີປອດການໃຊ້ນ້ຳມັນແອັດຊັງ ແລະ ກາຊວນ. ຫຼັງຈາກນັ້ນ, ພາຫະນະທຸກຄັນ ເທິງທ້ອງຖະໜົນ ໃນສອງປະເທດນີ້ຈະຂັບເຄື່ອນດ້ວຍພະລັງງານສະອາດ; ສ່ວນຍີ່ປຸ່ນ, ປະເທດມະຫາອຳນາດດ້ານອຸດສາຫະກຳ ຜະລິດລົດນັ້ນ ໄດ້ກຳນົດເອົາປີ 2050 ເປັນປີໂບກມືອຳລາຍານພາຫະນະທີ່ແລ່ນດ້ວຍນ້ຳມັນ ເຊື້ອໄຟດັ້ງເດີມ. ນອກຈາກເພື່ອຫຼຸດການປ່ອຍ ກາກບອນໃຫ້ໄດ້ 80% (ຂອງລະດັບປີ 2010) ພາຍໃນປີ 2050 ແລ້ວ, ຍີ່ປຸ່ນຍັງຫວັງຄອງຕະຫຼາດລົດຍົນຂອງໂລກ ທີ່ແລ່ນດ້ວຍພະລັງງານໄຟຟ້າອີກດ້ວຍ. ຢູ່ **ສປ ຈີນ**, ທາງການໄດ້ລິເລີ່ມແຜນຫ້າມຜະລິດ ແລະ ຈຳໜ່າຍລົດທີ່ແລ່ນດ້ວຍນ້ຳມັນເຊື້ອໄຟດັ້ງເດີມ ນັບແຕ່ປີ 2017 ເປັນຕົ້ນມາ, ແຕ່ການຫ້າມນັ້ນໄດ້ປະຕິບັດເປັນແຕ່ລະບາດກ້າວໄປ ເຊັ່ນ ເລີ່ມຈາກບໍລິສັດຜະລິດລົດຍີ່ຫໍ້ ໂວນໂວ ນັບແຕ່ປີ 2019 ເປັນຕົ້ນມາ. ທາງການຈີນ ວາງເປົ້າໝາຍຜະລິດລົດທີ່ແລ່ນດ້ວຍໄຟຟ້າ ແລະ ລົດໄຮບຼິດ ໃຫ້



ກວມເອົາອັດຕາສ່ວນຢ່າງໜ້ອຍ 8% ຂອງຈຳນວນລົດທັງໝົດ ພາຍໃນປີ 2018 ແລະ ໃຫ້ເພີ່ມຂຶ້ນເປັນ 12% ໃນປີ 2020 ແລະ ພາຍໃນປີ 2025; 1 ໃນຈຳນວນລົດແຕ່ລະ 5 ຄັນໃດທີ່ວາງຂາຍຈະຕ້ອງແມ່ນລົດໄຟຟ້າ ແລະ ໄຮບຼິດ. ເປົ້າໝາຍການຫັນໄປໃຊ້ລົດໄຟຟ້າຂອງຈີນນັ້ນ ມີສອງຈຸດປະສົງຄື ເພື່ອຫຼຸດຜ່ອນມົນລະພິດທາງອາກາດ ແລະ ຫຼຸດຜ່ອນການຊົມໃຊ້ນ້ຳມັນ. ສປ ຈີນ ນຳໃຊ້ນ້ຳມັນຫຼາຍເປັນອັນດັບທີ 2 ຂອງໂລກຮອງຈາກ ສະຫະລັດອາເມຣິກາ. **ຢູ່ປະເທດ ອິດສະຕຣາລີ,** ທາງການໄດ້ກຳນົດຫຼຸດຜ່ອນການປ່ອຍກາກບອນດີໂອຊິດ ໃຫ້ໄດ້ໃນລະດັບ 43% (ຈາກລະດັບປີ 2005) ພາຍໃນປີ 2030 ແລະ ຫຼຸດໃຫ້ລົງເປັນໂຕເລກສູນ (0) ພາຍໃນປີ 2050 ດັ່ງນັ້ນ ອິດສະຕຣາລີ ຈິ່ງໄດ້ສ້າງຮ່າງກົດໝາຍວ່າດ້ວຍການປ່ຽນແປງຂອງສະພາບອາກາດ ເຊິ່ງຄາດວ່າຈະສາມາດຜ່ານອອກມາເປັນກົດໝາຍສະບັບສົມບູນພາຍໃນເດືອນກັນຍາ 2023. ກົດໝາຍສະບັບນີ້ກຳນົດທິດຫຼຸດຜ່ອນການປ່ອຍກາກບອນ ທີ່ເປັນທາດພິດໄປພ້ອມໆກັບການຊຸກຍູ້ຂະແໜງການພະລັງງານທົດແທນ (ໝາຍເຖິງພະລັງງານສະອາດ) ໃຫ້ຂະຫຍາຍຕົວລະດັບ 82% ຂອງສ່ວນແບ່ງຕະຫຼາດພະລັງງານຂອງປະເທດພາຍໃນປີ 2030. ນີ້ຄືຄວາມໝາຍໝັ້ນຄັ້ນມືຂອງທ່ານ ແອນໂທນີ ອານບາເນຊີ ຂອງອິດສະຕຣາລີ ຄົນປັດຈຸບັນ.




# ກົດໝາຍ ວ່າດ້ວຍວິຈິດສິນ

ຕໍ່ຈາກສະບັບກ່ອນ

**ມາດຕາ 11 ປະຕິມາກຳ**

ປະຕິມາກຳ ແມ່ນການປັ້ນ, ການແກະສະຫຼັກ, ການຫຼໍ່ ຂີ້ເຜີ້ງ, ສະບູ, ໄມ້, ຫີນ, ປູນປຣາສເຕີ, ໂລຫະ ແລະ ວັດສະດຸອື່ນ ໃຫ້ເປັນຜົນງານ ແລະ ຜະລິດຕະພັນສິນ.

**ມາດຕາ 12 ສິລະປະພາບພິມ**

ສິລະປະພາບພິມ ແມ່ນ ຮູບພາບທີ່ໄດ້ຈາກການສ້າງແມ່ພິມ ເພື່ອພິມດ້ວຍນ້ຳມຶກ, ສີໂປສເຕີ, ສີອະຄຣີລິກ ແລະ ສີອື່ນ ລົງໃສ່ເຈ້ຍ, ວັດສະດຸ ຫຼື ໂລຫະອື່ນໃຫ້ເປັນຜົນງານ ແລະ ຜະລິດຕະພັນສິນ.

**ມາດຕາ 13 ນິເທດສິນ**

ນິເທດສິນ ແມ່ນຜະລິດຕະພັນສິນທີ່ໄດ້ຈາກການອອກແບບງານສິນ ເພື່ອໂຄສະນາເຜີຍແຜ່ ໂດຍຜ່ານພາຫະນະສື່ມວນຊົນ ກ່ຽວກັບຜະລິດຕະພັນ, ສິນຄ້າ, ວັດຖຸ ແລະ ເຄື່ອງຂອງ ເປັນຕົ້ນ ການອອກແບບຜະລິດຕະພັນ, ການອອກແບບສື່ສິ່ງພິມ, ການອອກແບບສື່ໂຄສະນາ, ການອອກແບບສື່ເອເລັກໂຕຣນິກ.

**ມາດຕາ 14 ສະຖາປັດຕະຍະກຳສິນ**

ສະຖາປັດຕະຍະກຳສິນ ແມ່ນ ສິ່ງກໍ່ສ້າງແຫ່ງສິລະປະ ທີ່ມີຮູບຊົງ,
ການຕົບແຕ່ງພາຍ
ໃນ ແລະ ພາຍນອກ ດ້ວຍລວດລາຍສິລະປະທີ່ປານີດ, ໂດດເດັ່ນທາງດ້ານວັດທະນະທຳ ແລະ ປະຫວັດສາດ ເປັນຕົ້ນ ລວດລາຍສິລະປະຂອງອາຄານ, ເຮືອນພັກອາໄສ, ສິມ,
ກຸດຕິ,
ຫໍແຈກ, ຫໍກອງ, ຫໍພະ, ປະຕູໂຂງ, ທາດ, ຫໍຫຼັກເມືອງ.

**ມາດຕາ 15 ຫັດຖະກຳສິນ**

ຫັດຖະກຳສິນ ແມ່ນຜະລິດຕະພັນຫັດຖະກຳທີ່ມີສິລະປະ ທີ່ເປັນເອກະລັກສະເພາະ ເປັນຕົ້ນ ເຄື່ອງຕົບແຕ່ງ, ເຄື່ອງປະດັບ, ເຄື່ອງເອ້, ເຄື່ອງໃຊ້ສອຍ, ເຄື່ອງນຸ່ງຫົ່ມ, ເຄື່ອງຈັກສານ.

**ໝວດທີ 2**
**ລັກສະນະຂອງວິຈິດສິນ**

**ມາດຕາ 16 ລັກສະນະຂອງວິຈິດສິນ**

ວິຈິດສິນ ມີ ສາມລັກສະນະ ດັ່ງນີ້:

1. ວິຈິດສິນພື້ນເມືອງ;
2. ວິຈິດສິນຮ່ວມສະໄໝ;
3. ວິຈິດສິນແບບສ້າງສັນ.

**ມາດຕາ 17 ວິຈິດສິນພື້ນເມືອງ**

ວິຈິດສິນພື້ນເມືອງ ແມ່ນຜົນງານດ້ານວິຈິດສິນທີ່ມີເອກະລັກທາງດ້ານສິລະປະ, ວັດທະນະທຳ ແລະ ປະຫວັດສາດ ທີ່ເປັນຕົ້ນແບບດັ່ງເດີມກ່ຽວກັບນິທານພື້ນບ້ານ, ພຸດທະປະຫວັດ ແລະ ອື່ນໆ ດ້ວຍການແຕ້ມລວດລາຍລາວ, ການແຕ້ມຝາພະໜັງ, ການຕິດແກ້ວ, ຟອກຄຳປິວ, ຟອກສີເງິນ, ຟອກສີຄຳ, ການປັ້ນ, ຫຼໍ່, ຄວັດ, ເຄື່ອງປັ້ນດິນເຜົາ ທີ່ເຮັດດ້ວຍດິນ, ປູນ, ພະທາຍເພັດ, ຂະມຸ, ໄມ້, ທອງສຳລິດ, ການສ້າງຜົນງານຫັດຖະກຳສິນ ທີ່ເປັນເອກະລັກແຕ່ລະທ້ອງຖິ່ນດ້ວຍການຕີເງິນ, ທອງ, ຄຳ.

ອ່ານຕໍ່ສະບັບໜ້າ

ທະນາຄານພັດທະນາລາວ
LDB Bank




# ລົມ-ໄຟ

# ຕົ້ນກົບເມກ



ສະພາບແວດລ້ອມທຸກມື້ນີ້ ມີການປ່ຽນແປງວ່ອງໄວ ເຊັ່ນ: ດິນຟ້າອາກາດຮ້ອນອົບເອົ້າກວ່າປີຜ່ານມາ ພ້ອມນີ້ບັນຫາໄຟໄໝ້ປ່າຍັງແຜ່ລາມ ບໍ່ສາມາດດັບມອດ ຫຼື ຄວບຄຸມໄດ້ງ່າຍ ເບິ່ງຄືວ່າດິນນ້ຳລົມໄຟທີ່ມະນຸດພະຍາຍາມເອົາຊະນະໄດ້ ບາງຄັ້ງ ດຽວນີ້ບໍ່ສາມາດຄວບຄຸມໄດ້ ເພາະມັນເກີດຜົນກະທົບກວ້າງທົ່ວໂລກ ແລະ ຄົນທົ່ວໂລກກໍສ້າງບັນຫາໃຫ້ເກີດໄພພິບັດ ພຽງເພື່ອຢາກເອົາຊະນະທຳມະຊາດ-ຕອບສະໜອງກິເລດຕັນຫາຂອງຕົນ.

ບັນຫາລົມ ແລະ ໄຟ ຈຶ່ງມີສະພາບຕ່າງຈາກແຕ່ກ່ອນ ທີ່ເຮົາຕ້ອງໄດ້ເອົາໃຈໃສ່ເຝົ້າລະວັງມີສະຕິບໍ່ປະໝາດ ເນື່ອງຈາກໄລຍະນີ້ມີບັນຫາທັງອາກາດຮ້ອນ ເຮັດໃຫ້ການເກີດອັກຄີໄພງ່າຍ, ຍົກຕົວຢ່າງອາທິດແລ້ວ ຜູ້ຂຽນຜ່ານໄປວຽກທາງເມືອງ ປາກງື່ມ ມີຄອບຄົວປະຊາຊົນຄອບຄົວໜຶ່ງ ດັງໄຟແຕ່ງກິນຢູ່ຖຽງນາແລ້ວມອດບໍ່ໝົດ ເວລາອອກໄປຫາກິນຂ້າງນອກ ເກີດລົມພັດແຮງໃສ່ຖ່ານໄຟເກີດລາມໄໝ້ຖຽງນາໝົດຫຼັງ...; ເລື່ອງໄຟເປັນຕາຢ້ານພໍໆກັບລົມພະຍຸ ທີ່ສາມາດພັດຕົ້ນໄມ້ ຫຼື ວັດຖຸເຮືອນຊານເປ່ເພໄດ້ ຖ້າວ່າເຮົາປະໝາດຂາດສະຕິ.

ກົມອຸຕຸນິຍົມ ແລະ ອຸທົກກະສາດ, ກະຊວງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ອອກໜັງສືລາຍງານ ສະພາບອາກາດໃນຫຼາຍແຂວງຈະມີຝົນຕົກ-ຟ້າຮ້ອງ ເຊິ່ງເຕືອນໃຫ້ເຮົາມີສະຕິບໍ່ປະໝາດ ຮູ້ຈັກຈັດມ້ຽນວັດຖຸສິ່ງຂອງພາຍໃນເຮືອນ ໃຫ້ປອດໄພຈາກກະແສລົມພັດຮຸນແຮງ-ເວລາທຽວທາງກໍຕ້ອງໄດ້ມີສະຕິ ເພາະການຂັບຂີ່ລົດໃນສະພາບມີກະແສລົມ- ຝົນຕົກຈະມີອຸປະສັກ ບາງຄັ້ງຫຼາຍຈຸດໄຟຟ້າບໍ່ມາເສັ້ນທາງມືດ ສ່ຽງເກີດອຸບັດເຫດ...

ເລື່ອງຂອງດິນຟ້າອາກາດນັ້ນ ຄົນເຮົາບໍ່ສາມາດຫຼີກໜີຈາກມັນໄດ້ ໄພພິບັດທີ່ເກີດຂຶ້ນຈາກສີມືມະນຸດ ຫຼື ຈາກທຳມະຊາດ ມັນກໍສົ່ງຜົນກະທົບໃສ່ຊີວິດມະນຸດເອງ ຜູ້ຂຽນຍັງຈື່: ຄົນບູຮານສອນວ່າ: ມະນຸດເຮົານັ້ນ ບາງທີບອກເຕືອນກັນບໍ່ຄ່ອຍເຊື່ອຟັງ ແຕ່ເມື່ອພົບກັບໄພທຳມະຊາດກັບຕົນເອງ ຈຶ່ງຮູ້ຈັກຢ້ານ!

# ມົນລະພິດ

# ດອກຫຍ້າ

ມົນລະພິດ ໝາຍເຖິງ ສິ່ງເສດເຫຼືອ, ວັດຖຸອັນຕະລາຍ ແລະ ມວນສານອື່ນໆ ລວມທັງຂີ້ຕົມ, ຂີ້ເຫຍື້ອ ຫຼື ສິ່ງເສດເຫຼືອຈາກການປ່ອຍຖິ້ມອອກຈາກຈຸດທີ່ເກີດມົນລະພິດ ຫຼືທີ່ມີຢູ່ແລ້ວໃນສະພາບແວດລ້ອມທຳມະຊາດ ເຊິ່ງສົ່ງຜົນກະທົບຕໍ່ຄຸນນະພາບຂອງສິ່ງແວດລ້ອມ ຫຼື ມີສະພາບທີ່ເປັນພິດ ແລະ ອັນຕະລາຍຕໍ່ສຸຂະພາບຂອງປະຊາຊົນ ລວມເຖິງລັງສີ, ຄວາມຮ້ອນ, ແສງສະຫວ່າງ, ສຽງ, ກິ່ນ, ການສັ່ນສະເທືອນ ຫຼື ສິ່ງລົບກວນອື່ນໆທີ່ເກີດ ຫຼື ປ່ອຍອອກມາຈາກແຫຼ່ງມົນລະພິດ; ໃນກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບປັບປຸງ ເລກທີ 026/ປປທ, ວັນທີ 17/1/2013 ມາດຕາ 2 ມົນລະພິດ ແມ່ນສານເຄມີ, ກຳມັນຕະພາບລັງສີ, ຄວັນ ລວມທັງແສງ, ສຽງ, ກິ່ນ, ຄວາມສັ່ນສະເທືອນ ແລະ ຄວາມຮ້ອນທີ່ເຈືອປົນໃນອາກາດ, ດິນ, ນ້ຳ ທີ່ມີຄ່າຄວາມເຂັ້ມຂຸ້ນເກີນມາດຕະຖານຄຸນນະພາບສິ່ງແວດລ້ອມ ຫຼື ມາດຖານການຄວາມຄຸມມົນລະພິດແຫ່ງຊາດ ເຊິ່ງເກີດຈາກການກະທຳຂອງມະນຸດ ຫຼື ຕາມທຳມະຊາດ ທີ່ມີຜົນກະທົບຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ, ພືດ ແລະ ສິ່ງມີຊີວິດອື່ນ ແລະ ລະບົບນິເວດ.

ປັດຈຸບັນ, ສິ່ງແວດລ້ອມມີການປ່ຽນແປງໄປເລື້ອຍ ຈົນເຮັດໃຫ້ເກີດຜົນກະທົບຕໍ່ການດຳລົງຊີວິດຂອງມວນມະນຸດ; ເຮົາມັກຈະໄດ້ຍິນຄຳວ່າ: ອາກາດເປັນພິດ, ນ້ຳເສຍ, ສຽງເປັນພິດ ເຊິ່ງສາເຫດຫຼັກທີ່ພາໃຫ້ເກີດບັນຫາເຫຼົ່ານັ້ນແມ່ນມາຈາກມະນຸດນັ້ນເອງເປັນຜູ້ກະທຳ ເປັນຕົ້ນແມ່ນການຕັດໄມ້ທຳລາຍປ່າ, ການຜະລິດສານສັງເຄາະທີ່ບໍ່ສາມາດລະລາຍໄດ້ ຫຼື ລະລາຍຍາກ ເປັນຕົ້ນແມ່ນຖົງຢາງປລາສະຕິກ, ໂຟມໃສ່ອາຫານ ເຊິ່ງເຮັດໃຫ້ປະລິມານຂີ້ເຫຍື້ອນັບມື້ນັບເພີ່ມຫຼາຍຂຶ້ນ; ການຜະລິດສານບາງຢ່າງທີ່ເປັນກ໊າສເຊັ່ນ: ຟີອອນ ທີ່ຊ່ວຍໃນການສີດສະເປ ແລະ ໃຊ້ໃນເຄື່ອງເຮັດຄວາມເຢັນ ກໍມີປະລິມານທີ່ເພີ່ມຂຶ້ນ ເຊິ່ງມັນຈະໄປທຳລາຍຊັ້ນໂອໂຊນທີ່ເປັນຊັ້ນບັນຍາກາດທີ່ຫຸ້ມຫໍ່ໂລກໄວ້ ແລະ ສົ່ງຜົນໃຫ້ໂລກຮ້ອນຂຶ້ນນັ້ນເອງ; ການສ້າງຜະລິດຕະພັນແທນວັດຖຸດິບທີ່ໄດ້ຈາກທຳມະຊາດ ເປັນຕົ້ນແມ່ນການໃຊ້ສະບູຝຸ່ນ, ສະບູກ້ອນ ເມື່ອໃຊ້ແລ້ວສິ່ງເຫຼົ່ານີ້ ຈະຕົກຄ້າງເປັນມົນລະພິດຢູ່ໃນອາກາດ, ນ້ຳ ແລະ ດິນ ເຮັດໃຫ້ເກີດຜົນເສຍຕໍ່ພືດ, ສັດ ແລະ ມະນຸດດ້ວຍກັນເອງ; ການສ້າງອຸປະກອນເຄື່ອງໄຟຟ້າບາງຊະນິດທີ່ໃຫ້ຄວາມຮ້ອນ, ແສງ, ສຽງ ທີ່ເຮັດໃຫ້ເກີດມົນລະພິດຕໍ່ມະນຸດນັບມື້ນັບຫຼາຍຂຶ້ນ; ການສ້າງຍານພາຫະນະທີ່ໃຊ້ໃນການເດີນທາງເຊັ່ນ: ລົດຈັກ, ລົດໃຫຍ່, ຍົນ ເຮັດໃຫ້ມີການປ່ອຍກ໊າສທີ່ເຫຼືອຈາກການເຜົາໄໝ້ຂອງນ້ຳມັນເຊື້ອໄຟ ອັນໄດ້ແກ່ອັອກຊາຍຂອງນິໂຕແຊນ ແລະ ອົກຊີແຊນ ທີ່ມີປະລິມານທີ່ເພີ່ມຂຶ້ນໃນອາກາດ.

ມະນຸດເຮົາເປັນຄົນສ້າງມົນລະພິດຂຶ້ນມາ ກ້າວຈົນໄປເຖິງການທຳລາຍສິ່ງແວດລ້ອມທີ່ເປັນທຳມະຊາດໃຫ້ສູນເສຍໄປເທື່ອລະເລັກລະນ້ອຍ; ດ້ວຍເຫດນັ້ນຈຶ່ງເກີດມີຄຳຖາມຂຶ້ນໃນສັງຄົມວ່າ ແມ່ນໃຜຈະເປັນຜູ້ແກ້ໄຂສິ່ງແວດລ້ອມທີ່ສູນເສຍໄປໃຫ້ກັບສູ່ສະພາບທີ່ດີຂຶ້ນ? ແຕ່ຄຳຕອບທີ່ດີທີ່ສຸດ ແລະ ເຮັດງ່າຍທີ່ສຸດ ກໍຄືທຸກຄົນຈະຕ້ອງຊ່ວຍກັນແກ້ປັບປ່ຽນພຶດຕິກຳຂອງຕົນເອງຕັ້ງແຕ່ມື້ນີ້ເປັນຕົ້ນໄປ ເພື່ອຈະເຮັດໃຫ້ບັນຫາສິ່ງແວດລ້ອມເປັນພິດຫຼຸດລົງໃນອະນາຄົດ ແລະ ເພື່ອທີ່ເຮົາຈະດຳລົງຊີວິດຕໍ່ໄປໃນສິ່ງແວດລ້ອມທີ່ດີໆໄດ້ຢ່າງຍາວນານ.



# ຂຽນຄຳລາວໃຫ້ຖືກ

# ຄູແສງ

ການໃຊ້ຄຳ ທີ່ມີອັກສອນຄູ່ ອັນປະກອບດ້ວຍໝວດອັກສອນສູງ ແລະ ອັກສອນຕ່ຳ ທີ່ມີວັນນະຍຸດເອກ x

| ອັກສອນສູງ | ອັກສອນຕ່ຳ |
|---|---|
| ເສື່ອ : ເສື່ອປູນອນ | ເຊື່ອ : ເຊື່ອໃຈໄດ້ |
| ສັ່ງ : ສັ່ງອາຫານ | ຊັ່ງ : ຊັ່ງນ້ຳໜັກ |
| ສ່ອງ : ສ່ອງກ້ອງ | ຊ່ອງ : ຊ່ອງທາງ |
| ສຸ່ມ : ສັກສຸ່ມ | ຊຸ່ມ : ປຽກຊຸ່ມ |
| ເສື່ອມ : ເສື່ອມເສຍ | ເຊື່ອມ : ເຊື່ອມຈອດ |
| ສ່ວຍ : ສ່ວຍສາອາກອນ | ຊ່ວຍ : ຊ່ວຍເຫຼືອ |
| ຖີ່: ຖີ່ຖ້ວນ | ທີ່ : ທີ່ຢູ່ |
| ຖົ່ວ : ໝາກຖົ່ວ | ທົ່ວ : ທົ່ວໄປ |




# ວິທີເຮັດວຽກ

## ພາກທີ 4

## ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)

**2. ຄຸນສົມບັດຂອງນັກປະຕິວັດ.**

ພະນັກງານ ແລະ ສະມາຊິກຂອງພັກ ທີ່ຢາກກາຍເປັນນັກປະຕິວັດແທ້ຈິງນັ້ນ ບໍ່ມີຫຍັງຍາກ. ເລື່ອງນັ້ນແລ້ວແຕ່ຍ້ອນໃຈຂອງຕົນເອງທັງສິ້ນ ຖ້າໃຈຂອງເຮົາຄິດແຕ່ຈະເຮັດເພື່ອປະເທດຊາດ ແລະ ເພື່ອພີ່ນ້ອງຮ່ວມຊາດແທ້ໆແລ້ວ ເຮົາກໍກ້າວໄປເຖິງບ່ອນສາມາດເສຍສະຫຼະປະໂຫຍດສ່ວນຕົວເພື່ອສ່ວນລວມ. ຖ້າໃຈເຮົາຫາກເສຍສະຫຼະປະໂຫຍດສ່ວນຕົວ ແລະ ເພື່ອສ່ວນລວມແລ້ວ ຂໍ້ບົກພ່ອງຈະນັບມື້ນັບໜ້ອຍລົງ ແລະ ຈິດໃຈຈະນັບມື້ນັບຫຼາຍຂຶ້ນ.

ຈິດໃຈດີນັ້ນ ເວົ້າຫຍໍ້ມີຢູ່ 5 ຂໍ້ຄື: ມະນຸດສະທຳ, ສັດຈະທຳ, ຍຸດຕິທຳ, ວິລິຍະທຳ, ສຸດຈະລິດທຳ

**ກ) ມະນຸດສະທຳ**

ແມ່ນຄວາມຮັກແພງຢ່າງຈິງໃຈ ເອົາຈິດເອົາໃຈເປັນຫ່ວງເປັນໄຍ, ຢາກຊ່ວຍເຫຼືອເພື່ອນສະຫາຍ ແລະ ພີ່ນ້ອງຮ່ວມຊາດແທ້, ເຫັນພີ່ນ້ອງຮ່ວມຊາດໄດ້ຮັບຄວາມລຳບາກກໍຄຽດແຄ້ນນຳ, ເຫັນພີ່ນ້ອງຮ່ວມຊາດເປັນສຸກ ກໍມ່ວນຊື່ນຳ, ຍ້ອນນ້ຳໃຈອັນນັ້ນ ຈຶ່ງເດັດດ່ຽວຕ້ານຍັນທຸກຄົນ, ທຸກການກະທຳທີ່ນຳຄວາມເສຍຫາຍມາສູ່ພັກ ສູ່ປະຊາຊົນ. ຍ້ອນນ້ຳໃຈອັນນັ້ນ ຈຶ່ງກຽມຈິດໃຈໄວ້ທົນທຸກຍາມລຳບາກກ່ອນຜູ້ອື່ນ ແລະ ຮັບຄວາມສຸກລຸນຜູ້ອື່ນ. ຍ້ອນນ້ຳໃຈອັນນັ້ນຈຶ່ງບໍ່ໂລພາຢາກຮັ່ງມີສະໜຸກສະໜານ, ບໍ່ຢ້ານທຸກຍາກລຳບາກ ບໍ່ຢ້ານອຳນາດໃດໆມານາບຂູ່ ຄົນທີ່ບໍ່ໂລພາ ບໍ່ຢ້ານບໍ່ກົວຫຍັງແນວນັ້ນ ວຽກການອັນໃດເປັນອັນແມ່ນອັນຖືກ ກໍສາມາດເຮັດໄດ້ໝົດ. ສິ່ງໃດເປັນອັນບໍ່ຖືກ ບໍ່ແມ່ນກໍສາມາດຫຼີກເວັ້ນໄດ້.

ອ່ານຕໍ່ສະບັບໜ້າ...



## ສຸກສະບາຍຫາຍໂຣຄາ

# ກາເຟດຳ

ໂດຍ: ກ່ອນຈາກ

ເມື່ອເວົ້າເຖິງກາເຟ ຫຼາຍຄົນຄົງຈະຄິດເຖິງລົດຊາດທີ່ຫອມຫວານ ແລະ ເຂັ້ມຂຸ້ນ ແຕ່ທ່ານຮູ້ບໍວ່າ ມີກາເຟອີກປະເພດໜຶ່ງທີ່ທ່ານຕ້ອງລອງຊີມຈັກຄັ້ງ ນັ້ນກໍຄືກາເຟດຳ; ກາເຟດຳ ເປັນກາເຟທີ່ມີລົດຊາດເຂັ້ມຂຸ້ນຂອງຄວາມເປັນກາເຟ ຈຶ່ງເຮັດໃຫ້ຫຼາຍຄົນເບິ່ງຂ້າມ ແຕ່ທ່ານຮູ້ບໍ່ວ່າ ກາເຟດຳທີ່ຂົມໆນັ້ນ ມີປະໂຫຍດຫຼາຍກວ່າທີ່ທ່ານຄິດ; ດັ່ງນັ້ນ, ມື້ນີ້ ພວກເຮົາຈຶ່ງນຳເອົາຄຸນປະໂຫຍດຂອງກາເຟດຳ ມາໃຫ້ທ່ານໄດ້ຮັບຮູ້ ເພື່ອເອົາໃຈຄໍກາເຟໂດຍສະເພາະ:

**1. ປ້ອງກັນເຊື້ອໄວຣັສ ຕັບອັກເສບ C.**

ມີການວິໄຈພົບວ່າ ການດື່ມກາເຟດຳເປັນປະຈຳໃນແຕ່ລະມື້ນັ້ນ ສາມາດຫຼຸດຜ່ອນ ແລະ ປ້ອງກັນພະຍາດຕັບອັກເສບ C ໄດ້ ໂດຍການດື່ມກາເຟຢ່າງໜ້ອຍ 3 ຈອກຕໍ່ມື້ ແຕ່ກໍຂຶ້ນກັບສຸຂະພາບຮ່າງກາຍຕົນເອງ ເພາະບາງຄົນອາດຈະມີພະຍາດປະຈຳຕົວທີ່ບໍ່ສາມາດດື່ມກາເຟ ຫຼື ຄາເຟອີນໄດ້.

**2 . ຊ່ວຍຫຼຸດນ້ຳໜັກ.**

ຫຼາຍຄົນອາດຈະເຂົ້າໃຈວ່າ ດື່ມກາເຟແມ່ນສາເຫດຂອງໂຣກອ້ວນ ແຕ່ຄວາມຈິງແລ້ວ ແມ່ນກົງກັນຂ້າມ ເພາະວ່າກາເຟດຳເປັນຕົວຊ່ວຍໃນການລະລາຍໄຂມັນໄດ້ເປັນຢ່າງດີ ແລະ ສາມາດທົດແທນພະລັງງານທີ່ເສຍໄປໄດ້; ການດື່ມກາເຟເປັນປະຈຳຫຼັງອາຫານ ຖືວ່າເປັນວິທີທີ່ດີທີ່ສຸດ ເພາະວ່າກາເຟຈະຊ່ວຍໃຫ້ໄຂມັນທີ່ທ່ານຮັບປະທານລົງໄປນັ້ນ ໄດ້ຮັບການສະຫຼາຍໄປຢ່າງງ່າຍດາຍ ແຕ່ຕ້ອງເປັນກາເຟດຳທີ່ບໍ່ມີນ້ຳຕານ.

**3 . ປ້ອງກັນພະຍາດຫືດ**

ກາເຟສາມາດປ້ອງກັນພະຍາດຫອບຫືດໄດ້ ເພາະພະຍາດຫອບຫືດ ເກີດຈາກເສັ້ນປະສາດສຳຮອງຖືກກະຕຸ້ນ ຈຶ່ງສະແດງອາການຫອບຫືດອອກມາ ແຕ່ເມື່ອດື່ມກາເຟດຳເປັນປະຈຳ ກາເຟດຳຈະຊ່ວຍຜ່ອນຄາຍຄວາມຕຶງຄຽດຂອງປະສາດສຳຮອງ ແລະ ບໍ່ກໍ່ໃຫ້ເກີດອາການຫອບຫືດໄດ້.

**4. ຫຼຸດຜ່ອນຄວາມສ່ຽງຂອງພະຍາດຫົວໃຈ.**

ເນື່ອງຈາກກາເຟດຳມີວິຕາມິນ B ລວມຊະນິດໜຶ່ງ ເອີ້ນວ່າ ນີໂຄຕິນ (ຊະນິດດີ) ທີ່ຊ່ວຍຫຼຸດໄຂມັນໃນເລືອດ ແລະ ປ້ອງກັນບໍ່ໃຫ້ຫຼອດເລືອດກ້າມ ພ້ອມທັງຫຼຸດໄຂມັນໃນເລືອດໄດ້ຫຼາຍອີກດ້ວຍ ແຕ່ສຳລັບຄົນທີ່ເປັນພະຍາດຫົວໃຈແລ້ວ ຫ້າມດື່ມເດັດຂາດ.

**5 . ປ້ອງກັນມະເຮັງ**

ໃນກາເຟດຳ ມີກົດອາຊິຕິກ ທີ່ຊ່ວຍຢຸດການຈະເລີນເຕີບໃຫຍ່ຂອງກ້ອນເນື້ອຮ້າຍ ແລະ ທຳລາຍຈຸລັງທີ່ຜິດປົກກະຕິ ທີ່ອາດຈະກາຍເປັນມະເຮັງໃນຕໍ່ໜ້າ ແຕ່ກາເຟດຳສາມາດປ້ອງກັນມະເຮັງໃນໄລຍະເລີ່ມຕົ້ນເທົ່ານັ້ນ ບໍ່ສາມາດໃຊ້ໃນການປິ່ນປົວພະຍາດມະເຮັງໄດ້.

**6 . ບັນເທົາອາການເຈັບຫົວ**

ການດື່ມກາເຟດຳ ເປັນປະຈຳ ກໍສາມາດຊ່ວຍຫຼຸດຜ່ອນອາການເຈັບຫົວໄດ້ ເພາະຄາເຟອີນ ຊ່ວຍຂະຫຍາຍເສັ້ນເລືອດ ເຮັດໃຫ້ການໄຫລວຽນຂອງເລືອດ ແລະ ບັນເທົາອາການເຈັບໃຫ້ດີຂຶ້ນ; ພ້ອມນັ້ນ, ຍັງສາມາດຊ່ວຍບັນເທົາອາການເຈັບຫົວເນື່ອງຈາກອາການເມົາຄ້າງໄດ້ອີກດ້ວຍ ແຕ່ບໍ່ຄວນດື່ມຫຼາຍເກີນໄປ ເພາະວ່າມັນອາດຈະສົ່ງຜົນກະທົບດ້ານລົບແກ່ເຮົາ.

ແຕ່ເຖິງຢ່າງໃດກໍຕາມ, ກາເຟ ຍັງມີຂໍ້ເສຍຢູ່ ເຊັ່ນ: ເຮັດໃຫ້ນອນບໍ່ຫຼັບ, ຖ່າຍເບົາເລື້ອຍໆ, ສົ່ງຜົນກະທົບບໍ່ດີຕໍ່ລູກໃນທ້ອງ (ສຳລັບແມ່ມານ), ກະເພາະເກີດການອັກເສບ ແລະ ອື່ນໆອີກຫຼາຍຢ່າງ; ສະນັ້ນ, ຄວນດື່ມກາເຟຢ່າງເໝາະສົມ ແລະ ເພີ່ມນ້ຳຕານ ຫຼື ນົມໃຫ້ໜ້ອຍທີ່ສຸດ ເພື່ອປ້ອງກັນພະຍາດເບົາຫວານ.

**ຂໍ້ມູນຈາກ: www.coffeefavour.com**

## ວາດກະວີລາວ

# ຮັກປ່າ

**#ບ.ຖິ່ນໂນນຄຸ້ມ**

❈ ຢູ່ໃນດົງດ່ານດ້າວ
ພູມລຳເນົາອຸດົມດີ
ຫຼາກຫຼາຍແນວນາມເຊື້ອ
ຖານຖິ່ນຮຽມຢູ່ຢັ້ງ ໂພນພະນັງເຂດແຄ້ວນ
❈ ສົມດັ່ງຄຳເອກອ້າງ
ພູມລຳເນົາເຂົາຂຽວ
ເກີດຊໍ່ຊອນຊີຊ້ອນ
ຫິມະພານໃຫຍ່ກ້ວາງ ດອຍຫຼວງລາວເຂດແຄ້ວນ
❈ ປ່າ ເປັນສະເໝືອນດັ່ງບ້ານ
ໃຫ້ຄ່າຄົນທັງສັດ
ຢ່າໄດ້ທຳລາຍມ້າງ
ຄົນສັດເຮົາຢູ່ໄດ້
❈ ແດງຈິກຮັງດູ່ແຕ້
ແຫນສະແນນລຳດວນ
ສົ້ມມໍຍໍຍູງຫວ້າ
ຫູກວາງບົກແປກເໝົ້າ
❈ ສົ້ມໂຮງເປືອຍເດື່ອຕ້ິວ
ສາຍຕາແລມອງເຫັນ
ລຽນເປັນແຖວຖັນຖ້ານ
ລູກຫຼານລາວຢ່າໄດ້
❈ ປຸ້ມລຸມກັນຊ່ວຍຊອ້ານ
ເປັນເຈົ້າຂອງມູນມັງ
ໃຫ້ຍືນຍົງຄົງໝັ້ນ
ຢ່າໃຫ້ແປປ່ຽນປີ້ນ
❈ ຮັກຊີວິດຢ່າໄດ້
ໄມ້ນາໆນາມແນວ
ຄົນອາໄສຜືນດ້າວ
ຊຸມຊົນຄົນໝູ່ບ້ານ ຫາອາຫານແລງຄ່ຳເຊົ້າ
❈ ສັດສາເສືອໝູ່ຊ້າງ
ກະຕ່າຍແລນແຕເຫງັນ
ນົກໂບຍບິນບິນເບື້ອງ
ໝາໃນໝູປ່າຈ້ອນ
❈ ງູເຫຼືອມເຫຼົ່າເທົ່າຫ້ອມ
ຈົງອາງແນວນາມດຳ
ຫາກປ່າພັງເພມ້າງ
ໂລກຂອງເຮົາຊິເດືອດຮ້ອນ
❈ ລົມເຄີຍລິວລ່ວງຕ້ອງ
ພັດກາຍເຢັນມີແຮງ
ຝົນເຄີຍລົນຮຳຫຍ້າ
ກົບອ່ຽນປາຢູ່ນ້ຳ
❈ ນົກເຂົາທອງພໍ່ຕູ້
ຫາກປ່າດອນດົງໝາ
ບ່າງໂບຍບິນບົນຟ້າ
ໝູປ່າສິງລະມັງຊ້າງ
❈ ກໍາຊິນຳຢັ່ງຢ້ອນ
ຫາກປ່າພູເຂົາຂຽວ
ຢ້ານແຕ່ຍືນເຮໄຫ້
ຢ້ານລະກຳເດືອດຮ້ອນ
❈ ຢ້ານເດ ຢ້ານນ້ຳໂຫມທັ່ງຖວ້ມ
ແລ້ງຈົນດິນເປັນຜົງ
ຊາວນາແນມນຳຟ້າ
ທໍລະມານອັ່ງແຄ້ນ
❈ ຮັກຊີວິດ ກໍຈົ່ງຮັກເຂດແຄ້ວນ
ຮັກເຂົາຂຽວສາຍທານ
ສັດອາໄສຊູຊື່ນ
ຄວາມຜູກພັນກ່ຽວຝັ້ນ

ແດນປ່າພະນາເຂົາ
ມາກມີແນວໄມ້
ເຄືອລຳລຽນຍ່ານ
ແດນດ້າວຮັ່ງອຸດົມ
ວາງຊື່ແດນລາວ
ງົດງາມແຊມຊ້ອນ
ໃນດອນແດນດ່ານ
ແດນບ້ານຊຸ່ມເຢັນ ແທ້ນາ
ເຮືອນຊານຢູ່ອາໄສ
ຊື່ນຊົມນຳໃຊ້
ຮອນຮານເຜົາປິ່ນ
ເພາະມີໄມ້ຄ່າແພງ
ແຄກອກຄອມແຄນ
ທົ່ມຍາງເຄັງຄໍ້
ມັນປາມື້ມ່ວງ
ກະເດົາຫວ້າກໍ່ໂບງ
ຄູນບາກຂະຍອມແກ
ຖ່ອນສະຄາມກຸງກ້ານ
ສຸດຕາເຫຼືອຍ່ານ
ໄຟຈີ້ຈູດສູມ ໃດເນີ
ຂະບວນລ່ຳແລມອງ
ເບິ່ງດູແລໄວ້
ພູມສະຖານບ້ານແມ່
ສູນສິ້ນເສື່ອມສະຫຼາຍ
ພະຍາບາດພິກສາ
ພໍ່າເຄືອຄຽນຕົ້ນ
ດອຍຫຼວງຂຽວສະອຸ່ມ
ກໍຍັງເຂົ້າປ່າໜາ ວ່າເດ
ເມີຍມັ່ງກວາງຟານ
ໝູ່ກະເລັ້ນເຍືອງເໝັ້ນ
ຄອນກັນເຫຼືອງງອຍງ່າ
ຈອນຟອນໄກ້ບ່າງໝູ
ສາເຊືອກສິງດົງ
ປຽດຍາວເຊົາຢັ້ງ
ລຳສັງລາງແປນເປົ່າ
ເຂັນຂ້ອນທຸກລະທົມ ທ່ານເອີຍ
ຕອງຫຼົ່ນລົງດິນ
ຊິປ່ຽນແປງແປປີ້ນ
ສາຍທາລາຊິແປປ່ຽນ
ຊິລາເວັ້ນຫ່າງໜອງ ແທ້ໃດ
ຊິຄອຍຄູ່ງອຍຄອນ ໃສນໍ
ເຈື່ອນພັງທະລາຍມ້າງ
ຊິຫາໂກນໃສຢູ່
ຊິຄາງໂອ້ຍໂອ່ຍຄວນ ລະນໍ
ຮອດມະນຸດຄົນເຮົາ
ຫ່ຽວຈົມຈຳພົ້ນ
ຝົນບໍ່ຮວາຍຮຳຮ່ຳ
ເຂັນຂ້ອນແລ່ນໂຮມ ເຈົ້າແລ້ວ
ໄພຄອບງຳຄົນ
ທົ່ງເລີງລະແຫງອ້າ
ເມກຂະຫຼາໄຫລຜ່ານ
ຫາກຖາງໄມ້ເປົ່າແປນ ພີ່ນ້ອງເອີຍ
ແດນປ່າພະນາຂຽວ
ດ່ານດອນດົງໄມ້
ຄົນດຳລົງຊີບຮ່ວມ
ພັນກ່ຽວກ່ອມສະເໝ ຊອບແລ້ວ.



## ໜ້າຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສາວຈົ້ມ

❈ *ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ* **ສະພາແຫ່ງຊາດ** *ຊຸດທີ IX ເລີ່ມເປີດແລ້ວ ໄຂຂຶ້ນຢ່າງເປັນທາງການ ແລະ ສືບຕໍ່ຍາວນານໄປຮອດວັນທີ 18 ກໍລະກົດ 2023* **ທີ່ຫ້ອງປະຊຸມ ສະພາແຫ່ງຊາດ** *ເຊິ່ງຕອບບົ້ບັນຍາກາດພວມຄຶກຄື້ນ ສສຊ ກ່າວມີຄ່າເຫັນມີປະເດັນຄາໃຈ 156 ໂຫແຈ້ງ ຟັງຄະແຫຼງການເອົ້າຜົນກອງປະຊຸມເປັນໄລຍະ ລໍໃຫ້ປວງປະຊາພີ່ນ້ອງ ຕິດຕາມພ້ອມພໍ່າກັນ* **ທ່ານເອີຍ!**

❈ **ຊົມ***ເຊີຍວັນແພດລາວ* **(18.6.1965-18.6.2023) 58 ປີ** *ລ່ວງໄສເວທີນີ້ ຝາກສົ່ງພອນໄຊ ລໍໃຫ້ມີຄວາມສຸກເຂັ້ມແຂງທັນທ້າວ ນັກຮົບຊຸດຂາວບ້ຳໃຈກ້ວາງ ຫານທະເລມິທຽມເທົ່າ ປະຊາລາວຫວັງ ເພິ່ງຊົ້ນ* **ແພດຖຸກຄົນລໍໃຫ້ສຸກລາບລົ້ນ ຍືນໝັ້ນຊົ່ວນິລັນ ທ່ານເອີຍ!**

## ຊວນຍິ້ມ

# ແອ່ນຕຸ້ງ

### ວຽກບ້ານ

ຢູ່ຫ້ອງຮຽນ ທ້າວກີນ້ອຍຮຽນອ່ອນກວ່າໝູ່ ໂດຍສະເພາະວິຊາເລກ, ແຕ່ວຽກບ້ານທີ່ຄູໃຫ້ວານນີ້ ລາວແກ້ຖືກທຸກຂໍ້, ຄູສົງໄສ ເລີຍຖາມ:

**ຄູ:** ບໍ່ແມ່ນພໍ່ຫຼານຊ່ວຍແກ້ວຽກບ້ານບໍ່

**ທ້າວກີ:** ບໍ່ໄດ້ຊ່ວຍ

**ຄູ:** ແນ່ໃຈບໍ່! ຢ່າຕົວະເດີ ຄູຮູ້ໃດ!

**ທ້າວກີ:** ບໍ່ໄດ້ຊ່ວຍແທ້ໆ ເພິ່ນແກ້ຄົນດຽວ

**ຄູ:** !!!




## ຄະຕິເຕືອນໃຈ

# ດອກຫຍ້າ

ເມື່ອມີສິດເລືອກ ຈົ່ງເລືອກໃນສິ່ງທີ່ມັກ
ແຕ່ເມື່ອເລືອກແລ້ວ ຈົ່ງຢ່າເສຍໃຈໃນສິ່ງທີ່ເລືອກ




# ມື້ນ - ພະລາດ

"ມື້ນ" ແລະ "ພະລາດ" ເປັນຄຳພ້ອມຄວາມໝາຍ ທີ່ໃຊ້ຄື ແລະ ຕ່າງກັນ ດັ່ງນີ້:

"ມື້ນ" ເປັນຄຳກິລິຍາ ໝາຍເຖິງ "ຖະໄຫຼໄປ, ຕະລາດໄປ, ພະລາດໄປ" ເຊັ່ນ:

- ຍາມຝົນມາ ທາງທີ່ບໍ່ໄດ້ປູຢາງຈັ່ງແມ່ນມັນມື້ນ.
- ແມ່ຂອງລາວຕ້ອງໄປໂຮງໝໍແບບສຸກເສີນ ເພາະມື້ນລົ້ມຢູ່ຫ້ອງນ້ຳ.
- ພື້ນເຮືອນປັດ ແລະ ຖູຈົນກ້ຽງເຫຼື້ອມ ເວລາຍ່າງຕ້ອງໄດ້ລະວັງ ເພາະມັນມື້ນ.

ພ້ອມກັນນັ້ນ "ມື້ນ" ຍັງໝາຍເຖິງ "ເປັນເມືອກເປັນມັນຈັບບໍ່ຕິດ" ເຊັ່ນ:

- ອ່ຽນມີເມືອກຢູ່ຕາມໂຕ ຈັບຍາມໃດມື້ນຍາມນັ້ນ.

"ພະລາດ" ເປັນຄຳກິລິຍາ ໝາຍເຖິງ "ອາການຕີນຢຽບຈັ້ງໄວ້ບໍ່ຢູ່, ຖະໄຫຼໄປ, ມື້ນ" ເຊັ່ນ:

- ລາວຢຽບເປືອກໝາກກ້ວຍ ຈົນພະລາດລົ້ມ.
- ສັດສີ່ຕີນຍັງຮູ້ພະລາດ ນັກປາດຍັງຮູ້ຫຼົງຄວາມ.
- ທາງນີ້ມີຂີ້ຕົມຫຼາຍ ຄ່ອຍໆຍ່າງ ຈັກໜ້ອຍຊິພະລາດຍ້ອນ.

ລາງເທື່ອ, ຄຳທັງສອງສາມາດຊ້ອນໃສ່ກັນເປັນ ພະລາດມື້ນ ດັ່ງຄຳຜະຫຍາທີ່ວ່າ:

- ຢ່າມາຕີຖະແຫຼງລົ້ມ ຕີນບໍ່ມີພະລາດມື້ນ ຢ່າມາຕິວາດເວົ້າ ລວງຂ້ອຍແລ້ວບໍ່ເອົາ

# ຂໍ້ສັງເກດ: ເວລາສະກົດຄຳວ່າ "ມື້ນ", ຢ່າຫຼົງສະກົດເປັນ "ໝື່ນ" ທີ່ມີຄວາມໝາຍວ່າ ສິບພັນ ເພາະທັງສອງຄຳນີ້ເປັນຄຳພ້ອມສຽງ.




ເພິ່ນວ່າ ປາກ ຕາ ຫູ
ເປັນມິດສາມເກືອຂອງຫົວໃຈ
ແມ່ນບໍ່ວ່າໃຈຄິດດີ ຫຼື ຮ້າຍ
ຖ້າສາມມິດນີ້ບໍ່ພ້ອມ ຫົວໃຈ ກໍໝົດຄຸນຄ່າ.




# ອິນໂດເນເຊຍ ມ້າງເຄືອຂ່າຍຄ້າມະນຸດ ຊ່ວຍເຫຼືອເຫຍື່ອ 1.500 ກວ່າຄົນ

*ໃນເດືອນມິຖຸນານີ້, ຕຳຫຼວດອິນໂດເນເຊຍ ສາມາດຈັບກຸມຜູ້ຖືກສົງໄສເກືອບ 500 ຄົນ ທີ່ກ່ຽວຂ້ອງກັບຂະບວນການຄ້າມະນຸດ ເຊິ່ງມີຜູ້ຕົກເປັນເຫຍື່ອຫຼາຍກວ່າ 1.500 ຄົນ.*



ອີງຕາມການລາຍງານຂ່າວເມື່ອວັນທີ 21 ມິຖຸນາຜ່ານມາ ໃຫ້ຮູ້ວ່າ: ອິນໂດເນເຊຍ ເປັນໜຶ່ງໃນປະເທດທີ່ສົ່ງອອກແຮງງານລາຍໃຫຍ່ທີ່ສຸດໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ ໂດຍຊາວອິນໂດເນເຊຍຫຼາຍແສນຄົນຈາກທ້ອງຖິ່ນຫ່າງໄກເດີນທາງອອກນອກປະເທດທຸກປີຜ່ານເສັ້ນທາງທີ່ບໍ່ເປັນທາງການ ເພື່ອຫາວຽກທີ່ໄດ້ຄ່າຕອບແທນສູງກວ່າ.

ທ່ານ ອາໝັດ ຣາມາຫານ ໂຄສົກປະຈຳສຳນັກງານຕຳຫຼວດແຫ່ງຊາດຂອງອິນໂດເນເຊຍ ກ່າວວ່າ: ທາງການອິນໂດເນເຊຍຊ່ວຍເຫຼືອເຫຍື່ອ 1.553 ຄົນ ໃນໄລຍະ 2 ອາທິດ ກ່ອນພວກເຂົາຈະຖືກສົ່ງອອກນອກປະເທດ. ອີກທັງລະຫວ່າງວັນທີ 5-18 ມິຖຸນາຜ່ານມາ ຕຳຫຼວດ, ສາມາດຈັບກຸມຜູ້ຖືກສົງໄສໄດ້ 494 ຄົນ ສ່ວນຜູ້ຄ້າມະນຸດລາຍໃຫຍ່ອີກ 5 ຄົນ ກຳລັງຖືກຕາມລ່າ.

ທັງນີ້, ເຫຍື່ອຫຼາຍຄົນໄດ້ຮັບການຊ່ວຍເຫຼືອຈາກບ່ອນອາໄສທີ່ຜິດກົດໝາຍ ເຊິ່ງພວກເຂົາກຳລັງຈະຖືກຂາຍໄປເປັນຄົນຮັບໃຊ້, ລູກເຮືອ ຫລື ໂສເພນີ ຕະຫຼອດຈົນການສະແຫວງຫາຜົນປະໂຫຍດສ່ວນຕົວຈາກເດັກ.

ຂະນະທີ່ສະຫະປະຊາຊາດ (UN) ລະບຸວ່າ: ປະຊາຊົນໃນອິນໂດເນເຊຍປະມານ 100.000-1 ລ້ານຄົນ ຖືກໃຫ້ໄປເຮັດວຽກບໍລິການທາງເພດ ຫຼື ຖືກບັງຄັບໃຊ້ແຮງງານໃນທຸກໆປີ.

ດ້ວຍເຫດນີ້, ລັດຖະບານອິນໂດເນເຊຍ ຈຶ່ງດຳເນີນການເພື່ອເພີ່ມການສອບສວນ, ການດຳເນີນຄະດີ ແລະ ການລົງໂທດສຳລັບການຄ້າມະນຸດລວມທັງພະຍາຍາມສົ່ງຜູ້ທີ່ຕົກເປັນເຫຍື່ອຂອງການຄ້າມະນຸດກັບປະເທດອື່ນໆໃນອາຊີຕາເວັນອອກສ່ຽງໃຕ້.




# ກາລິບເບ

## ພົມ 4 ໜ້າ (ພຣົມ)

ຄົນທົ່ວໄປ ສ່ວນຫຼາຍຈະເຂົ້າໃຈວ່າ ພະພົມ ຫຼື ພົມ ທີ່ຢູ່ໃນຊັ້ນພົມນັ້ນ ມີ 4 ໜ້າ ແຕ່ມີຜູ້ສົນໃຈຖາມວ່າ ຖ້າພົມມີ 4 ໜ້າຈິງ ແລ້ວພົມຈະນອນໄດ້ແນວໃດ. ຖ້າເຂົານອນແບບເອົາຫງ່ອນເປີໃສ່ໝອນ ແລ້ວຈະຫາຍໃຈໄດ້ແນວໃດ ເພາະຮູດັງພົມທັບໃສ່ກັບໝອນ ແລ້ວຈະຫາຍໃຈບໍ່ໄດ້.

ທີ່ຈິງແລ້ວ ພົມນັ້ນບໍ່ມີ 4 ໜ້າ ແຕ່ໝາຍເຖິງພົມວິຫານ 4 ຕ່າງຫາກ ເປັນທຳປະຈຳໃຈຂອງຜູ້ປົກຄອງ ຄືຕ້ອງເປັນຜູ້ເບິ່ງແຍງບັນຫາໃຫ້ຮອບຄອບທັງ 4 ດ້ານດ້ວຍຄວາມເປັນທຳ ພົມວິຫານ 4 ໄດ້ແກ່:

1. ເມດຕາ: ຄືຕ້ອງເປັນຜູ້ມີຄວາມສົງສານ ຕໍ່ໝູ່ເພື່ອນ ຫຼື ບໍລິວານຂອງຕົນ ບໍ່ອິດສາບັງບຽດຕໍ່ເພື່ອນດ້ວຍກັນ ຫຼື ຄົນທົ່ວໄປ. ບໍ່ທຳລາຍປະຫັດປະຫານກັນ. ຊີວິດມະນຸດ ຫຼື ສັດເດຍລະສານ ກໍມີຄ່າເທົ່າທຽມກັນ ມີຄວາມປາຖະໜາຢາກໃຫ້ຮຸ່ງເຮືອງ ຈະເລີນດ້ວຍກັນ ທັງຢູ່ເຢັນເປັນສຸກ.

2. ກະລຸນາ: ຄືເປັນຜູ້ຢາກຊ່ວຍເຫຼືອເກື້ອກູນອຸດໜູນກໍຄືເພື່ອນບໍລິວານ ຜູ້ທີ່ເຂົາໄດ້ຮັບຄວາມເດືອດຮ້ອນ ຫຼືທຸກຍາກລຳບາກ ດ້ວຍການເສຍສະຫຼະວັດຖຸສິ່ງຂອງໆຕົນ ເທົ່າທີ່ມີທຸກຢ່າງບໍ່ເຫັນແກ່ປະໂຫຍດສ່ວນຕົນ ຄືຕ້ອງເຫັນແກ່ຄົນອື່ນ ຫລືສ່ວນລວມເປັນຈຸດໜັກ.

3. ມຸທິຕາ: ຄືເປັນຜູ້ຍິນດີ ຍິນຊອບໃນເພື່ອນບໍລິວານ ເຊິ່ງເຂົາໄດ້ຮັບຄວາມພາສຸກຄວາມຈະເລີນ ທາງດ້ານຍົດຖາບັນດາສັກ ຫຼື ຮັ່ງມີສີສຸກ ດ້ວຍວັດຖຸເຂົ້າຂອງ ກໍຕ້ອງມີສ່ວນມີຄວາມຍິນດີ ຍິນຊອບນຳເຂົາ ບໍ່ມີຄວາມອິດສາພະຍາບາດແຕ່ປະການໃດ ເຫັນເຂົາໄດ້ດີມີສຸກ ກໍຍິນດີນຳ.

4. ອຸເປກຂາ: ຄືເປັນຜູ້ຕັ້ງຢູ່ໃນຄວາມຫວ່າງເສີຍ ເມື່ອເຫັນເຂົາໄດ້ຮັບຄວາມກ້າວໜ້າທາງດ້ານຊັ້ນຕຳແໜ່ງ ຫຼື ຍົດຕ່າງໆ ກໍດີໃຈນຳ ແລະ ບໍ່ເສຍໃຈຈົນເກີນໄປ ທັງໃຫ້ກຳລັງໃຈສະເໝີຕົ້ນສະເໝີປາຍ ເມື່ອເຫັນເຂົາຜິດພາດ ກໍຕ້ອງວາງເສີຍ ບໍ່ຢຽບຢ່ຳຊ້ຳເຕີມ.

ທີ່ກ່າວມານັ້ນ ແມ່ນພົມວິຫານ 4 ແມ່ນທຳມະຂອງຜູ້ປົກຄອງໃນຂັ້ນຕ່າງໆ ຖ້າຜູ້ໃດຄຸ້ມຄອງໄດ້ທັງ 4 ຢ່າງນັ້ນ ກໍຈະເທົ່າກັບມີ 4 ໜ້າ ເພາະເປັນຜູ້ຮອບຄອບ ແລະ ຮອບດ້ານ ຍ້ອນແນວນັ້ນເອງ ຈຶ່ງບໍ່ຄວນເຂົ້າໃຈວ່າ ພະພົມມີ 4 ໜ້າ.

# ປະມວນພາບກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX
















**ຜູ້ຊີ້ນຳ :**
ທ່ານ ສີງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ :**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ຂັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

**ກອງບັນນາທິການ :**
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ທອມສະນິດ
ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :**
ນາງ ນິດຕາ ຄຸນປາກດີ